ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*******************************

ລັດຖະບານ

ເລກທີ 230 /ລບ

ນະຄອນຫລວງວຽງຈັນ, ວັນທີ 4.6.2012.

# ດຳລັດ
## ວ່າດ້ວຍການຄຸ້ມຄອງການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ເລກທີ 03/ສພຊ, ລົງວັນທີ 25 ກໍລະກົດ 2008;
- ອີງຕາມມະຕິກອງປະຊຸມລັດຖະບານປະຈຳເດືອນ ພຶດສະພາ 2012, ຄັ້ງວັນທີ 25 ພຶດສະພາ 2012;
- ອີງຕາມໜັງສືສະເໜີຂອງກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0752/ກປ ລົງວັນທີ 18 ພຶດສະພາ 2012.

### ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫລັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງການເຄື່ອນຍ້າຍຢູ່ພາຍໃນປະເທດ, ນຳເຂົ້າ ແລະ ສົ່ງອອກສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ເພື່ອກັນ ແລະ ສະກັດກັ້ນພະຍາດສັດ, ຮັບປະກັນຄວາມປອດໄພດ້ານສະບຽງອາຫານ ແລະ ປົກປັກຮັກສາສຸຂະພາບຂອງຄົນ, ສັດ ທັງເປັນການປະກອບສ່ວນພັດທະນາເສດຖະກິດ ແລະ ສັງຄົມຂອງຊາດ ໃຫ້ມີຄວາມເຕີບໃຫຍ່ເຂັ້ມແຂງ.

**ມາດຕາ 2. ການຄຸ້ມຄອງການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ**

ການຄຸ້ມຄອງການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ແມ່ນ ການຈັດຕັ້ງປະຕິບັດ, ການຕິດຕາມກວດກາຄວາມຖືກຕ້ອງທາງດ້ານເອກະສານ ແລະ ການກວດກາດ້ານ

ສັດຕະວະແພດ ໃນການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ຈາກສະຖານທີ່ໜຶ່ງ ໄປຍັງອີກສະຖານທີ່ອື່ນ ຢູ່ພາຍໃນປະເທດ ແລະ ລະຫວ່າງປະເທດ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສັດລ້ຽງທີ່ຕິດຕາມມານຳ** ໝາຍເຖິງ ສັດທຸກປະເພດທີ່ຕິດຕາມມານຳເຈົ້າຂອງສັດ ຫລື ບຸກຄົນທີ່ກ່ຽວຂ້ອງ ທີ່ບໍ່ມີຈຸດປະສົງທາງດ້ານການຄ້າ;
2. **ຜະລິດຕະພັນສັດທີ່ບໍ່ສາມາດບໍລິໂພກໄດ້** ໝາຍເຖິງ ທຸກພາກສ່ວນຂອງສັດ ຊຶ່ງນອກຈາກຊີ້ນ ທີ່ແຍກອອກມາຈາກໂຕສັດ ລວມທັງ ຊາກສັດເປັນໂຕ ເຊັ່ນ: ກະດູກ, ເຂົາ, ເລັບ, ຂົນ, ຂົນແກະ, ຂົນນົກ-ຂົນໄກ່ ຫລື ສິ້ນສ່ວນອື່ນ;
3. **ວັດຖຸກ່ຽວຂ້ອງກັບສັດ ແລະ ຜະລິດຕະພັນສັດ** ໝາຍເຖິງ ວັດຖຸທີ່ນຳໃຊ້ສຳລັບການຫຸ້ມຫໍ່, ຕູ້ບັນຈຸ, ອຸປະກອນ ຫລື ເຄື່ອງມືອື່ນ ທີ່ນຳໃຊ້ເຂົ້າໃນການເຄື່ອນຍ້າຍສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ;
4. **ແນວພັນສັດ** ໝາຍເຖິງ ສັດທີ່ມີສາຍພັນຈະແຈ້ງ ຊຶ່ງມີເປົ້າໝາຍນຳໃຊ້ເປັນພໍ່ແມ່ພັນ ສຳລັບການສືບພັນ, ການຜະລິດລູກສັດ ຫລື ການສຶກສາຄົ້ນຄ້ວາ;
5. **ຜູ້ຂົນສົ່ງ** ໝາຍເຖິງ ບຸກຄົນ ຫລື ນິຕິບຸກຄົນ ຫລື ການຈັດຕັ້ງໃດໜຶ່ງ ທີ່ອາໄສຢູ່ ສປປ ລາວ ຫລື ຕ່າງປະເທດ ທີ່ເຄື່ອນຍ້າຍ ຫລື ຂົນສົ່ງສັດ, ຜະລິດຕະພັນສັດ ແລະຜະລິດຕະພັນສິນຄ້າ ກ່ຽວກັບສັດ ຢູ່ພາຍໃນປະເທດ ລວມທັງນຳເຂົ້າ, ສົ່ງອອກ ຫລື ຂົນສົ່ງຜ່ານດິນແດນ ສປປ ລາວ;
6. **ດ່ານກວດກາສັດຕະວະແພດສາກົນ** ໝາຍເຖິງ ດ່ານນຳເຂົ້າ ຫລື ສົ່ງອອກສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ຊຶ່ງຕັ້ງຢູ່ດ່ານຊາຍແດນ ຕາມການກຳ ນົດຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ;
7. **ດ່ານກວດກາທ້ອງຖິ່ນ** ໝາຍເຖິງ ດ່ານກວດກາທີ່ສ້າງຕັ້ງຂຶ້ນຢູ່ຊາຍແດນຂອງແຂວງ, ນະຄອນ ຫລື ຢູ່ເຂດນອກສຸດຂອງເຂດເຫລືອງ ຫລື ເຂດແດງ ຕາມການກຳນົດ ຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ;
8. **ບັນຊີພະຍາດສັດ** ໝາຍເຖິງ ລາຍການຂອງພະຍາດສັດ ທີ່ກຳນົດຂຶ້ນ ໂດຍອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ;
9. **ຊີ້ນ** ໝາຍເຖິງ ພາກສ່ວນໃດໜຶ່ງຂອງສັດທີ່ສາມາດກິນໄດ້;
10. **ເຂດກັກກັນສັດ** ໝາຍເຖິງ ເຂດທີ່ກຳນົດຂຶ້ນໂດຍອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ໃຫ້ເປັນບ່ອນກັກກັນສັດ ເພື່ອຕິດຕາມກວດກາ, ເຝົ້າລະວັງ, ປິ່ນປົວ, ຮັກສາ ແລະ ສຶກສາຄົ້ນຄວ້າ;
11. **ສະຖານນີກັກກັນສັດ** ໝາຍເຖິງ ສະຖານທີ່ ທີ່ສ້າງຕັ້ງຂຶ້ນເປັນບ່ອນກັກກັນສັດຊົ່ວຄາວ ໂດຍແຍກສັດອອກໄວ້ຕ່າງຫາກ ໂດຍບໍ່ໃຫ້ມີການພົວພັນກັບສັດອື່ນ ທັງທາງກົງ ຫລື ທາງອ້ອມ ຊຶ່ງມີກຳນົດເວລາ ໃນການຕິດຕາມກວດກາ, ເຝົ້າລະວັງ, ປິ່ນປົວ, ຮັກສາ ແລະ ວິໄຈ;

12. **ເຂດແດງ** ໝາຍເຖິງ ຂອບເຂດທີ່ມີການນຳໃຊ້ມາດຕະການຄວບຄຸມພະຍາດສັດຢ່າງເຂັ້ມງວດ ເປັນຕົ້ນ ເຂດທີ່ມີການລະບາດຂອງພະຍາດສັດ, ບໍລິເວນທີ່ສົງໄສວ່າ ມີການປົນເປື້ອນ ດ້ວຍເຊື້ອພະຍາດ ຫລື ໄດ້ຮັບການຢືນຢັນວ່າ ພົບເຊື້ອພະຍາດລະບາດສັດໃດໜຶ່ງ ຈາກຫ້ອງວິໄຈພະຍາດສັດ;
13. **ເຂດເຫລືອງ** ໝາຍເຖິງ ຂອບເຂດອ້ອມຮອບເຂດແດງ ທີ່ກຳນົດຂຶ້ນເພື່ອປ້ອງກັນສຸຂະພາບຂອງສັດທີ່ຢູ່ໃກ້ເຂດແດງ ໂດຍນຳໃຊ້ມາດຕະການພື້ນຖານທາງດ້ານລະບາດວິທະຍາ;
14. **ພາຫານະ** ໝາຍເຖິງ ທຸກຮູບແບບ ແລະ ວິທີການຂອງການຂົນສົ່ງ ທັງທາງບົກ, ທາງນ້ຳ ແລະ ທາງອາກາດ;
15. **ຢາປິ່ນປົວສັດ** ໝາຍເຖິງ ວັດຖຸໃດໜຶ່ງທີ່ນຳໃຊ້ໃນຈຳນວນ ຫລື ປະລິມານທີ່ແນ່ນອນຕໍ່ສັດ ເພື່ອທຳລາຍພະຍາດ ຫລື ເຮັດໃຫ້ຂະບວນການຂະຫຍາຍຂອງພະຍາດຫລຸດລົງ ເພື່ອຊ່ວຍໃຫ້ຮ່າງກາຍສັດ ສາມາດຕ້ານທານຕໍ່ພະຍາດ ຫລື ກະຕຸ້ນໃຫ້ສັດມີການຈະເລີນເຕີບໂຕ ແລະ ໃຫ້ຜົນຜະລິດຫລາຍຂຶ້ນ;
16. **ຄວາມຈຳເປັນທາງດ້ານພາວະວິໄສໃດໜຶ່ງ** ໝາຍເຖິງ ເຫດການໃດໜຶ່ງທີ່ເກີດຂຶ້ນໃນໄລຍະເວລາຂົນສົ່ງສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ແຕ່ດ່ານ ກວດກາສັດຕະວະແພດຂອງປະເທດຕົ້ນທາງ ຫາດ່ານກວດກາສັດຕະວະແພດຂອງ ສປປ ລາວ ຊຶ່ງເຫດການດັ່ງກ່າວນັ້ນ ບໍ່ຢູ່ໃນການຄວບຄຸມຂອງບຸກຄົນໃດໜຶ່ງ;
17. **ການເຄື່ອນຍ້າຍ** ໝາຍເຖິງ ການເຄື່ອນຍ້າຍສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດຈາກສະຖານທີ່ໜຶ່ງ ໄປຫາສະຖານທີ່ໜຶ່ງ.

**ມາດຕາ 4. ຫລັກການພື້ນຖານ ໃນການຄຸ້ມຄອງການເຄື່ອນຍ້າຍ**

ໃນການຄຸ້ມຄອງການເຄື່ອນຍ້າຍສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ໃຫ້ປະຕິບັດຕາມ ຫລັກການພື້ນຖານ ດັ່ງນີ້:

1. ກຳນົດມາດຕະການດ້ານສຸຂານາໄມ ກ່ຽວກັບການຄຸ້ມຄອງການເຄື່ອນຍ້າຍ ຊຶ່ງຕ້ອງປະຕິບັດ ດັ່ງນີ້:
   ກ. ກຳນົດ ຫລື ນຳໃຊ້ມາດຕະການເທົ່າທີ່ຈຳເປັນເທົ່ານັ້ນ ໂດຍອີງໃສ່ມາດຕະຖານ, ຄຳແນະນຳ ແລະ ຄູ່ມືສຳລັບການປະຕິບັດສາກົນ ເພື່ອກັນສຸຂະພາບສັດ;
   ຂ. ປະເມີນຄວາມສ່ຽງ ແລະ ສອດຄ່ອງກັບຄວາມສ່ຽງນັ້ນ;
   ຄ. ບໍ່ເຄັ່ງຄັດ ຫລື ເຂັ້ມງວດເກີນຄວາມຈຳເປັນ ແລະ ບໍ່ເປັນການສ້າງອຸປະສັກທີ່ບໍ່ຈຳເປັນຕໍ່ການຄ້າ;
   ງ. ບໍ່ຈຳແນກລະຫວ່າງຜະລິດຕະພັນ, ຜູ້ຜະລິດພາຍໃນ ຫລື ຕ່າງປະເທດ ທີ່ມີເງື່ອນໄຂຄືກັນ.
2. ຮັບຮູ້ຄວາມເທົ່າທຽມຂອງມາດຕະການດ້ານສຸຂານາໄມ ຂອງປະເທດສົ່ງອອກ ທີ່ສາມາດຢັ້ງຢືນໄດ້ວ່າ ມາດຕະການນັ້ນ ເທົ່າທຽມກັບມາດຕະການດ້ານສຸຂານາໄມ ຂອງ ສປປ ລາວ ຫລື ສອດຄ່ອງກັບລະດັບ ຂອງມາດຕະການປ້ອງກັນທີ່ເໝາະສົມ ຂອງ ສປປ ລາວ;

3. ຮັບຮູ້ມາດຕະການດ້ານສຸຂານາໄມຂອງຕ່າງປະເທດ ບົນພື້ນຖານການຕົກລົງຮ່ວມກັນ ຊຶ່ງມາດຕະຖານດັ່ງກ່າວ ຕ້ອງສອດຄ່ອງກັບລະດັບການປ້ອງກັນຄວາມສ່ຽງຂອງ ສປປ ລາວ ກຳນົດ.

**ມາດຕາ 5. ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບສຳນັກງານ, ອົງການຂອງລັດ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ, ກຸ່ມລ້ຽງສັດ, ສະມາຄົມລ້ຽງສັດ, ສະຫະກອນ, ບຸກຄົນ ຫລື ນິຕິບຸກຄົນທີ່ພົວພັນກັບການເຄື່ອນຍ້າຍສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ພາຍໃນປະເທດ ແລະ ລະຫວ່າງປະເທດ.

ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ຂັ້ນສູນກາງ ເປັນຜູ້ກຳນົດບັນຊີສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ໃນແຕ່ລະໄລຍະ.

## ໝວດທີ 2
## ການເຄື່ອນຍ້າຍພາຍໃນປະເທດ

**ມາດຕາ 6. ການຄວບຄຸມ ແລະ ການກວດກາ ການເຄື່ອນຍ້າຍພາຍໃນປະເທດ**

ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ເປັນຜູ້ຄວບຄຸມ ແລະ ກວດກາການເຄື່ອນຍ້າຍສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ໃນກໍລະນີມີການລະບາດຂອງພະຍາດສັດ ໂດຍມີການກຳນົດຂອບເຂດການລະບາດຂອງພະຍາດສັດ ຊຶ່ງປະກອບດ້ວຍ ເຂດແດງ, ເຂດເຫລືອງ ແລະ ເຂດປອດພະຍາດ.

**ມາດຕາ 7. ການຫ້າມເຄື່ອນຍ້າຍພາຍໃນເຂດແດງ**

ໃນກໍລະນີມີການປະກາດເປັນເຂດແດງ ຫ້າມບຸກຄົນ, ນິຕິບຸກຄົນໃດໜຶ່ງ ເຄື່ອນຍ້າຍສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ກ່ຽວຂ້ອງກັບພະຍາດລະບາດສັດ ຊຶ່ງກຳລັງລະບາດ ເຂົ້າ ຫລື ອອກເຂດດັ່ງກ່າວ.

**ມາດຕາ 8. ການຫ້າມເຄື່ອນຍ້າຍພາຍໃນເຂດເຫລືອງ**

ໃນກໍລະນີມີການປະກາດເປັນເຂດເຫລືອງ ຫ້າມບຸກຄົນ, ນິຕິບຸກຄົນໃດໜຶ່ງ ເຄື່ອນຍ້າຍສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ກ່ຽວຂ້ອງກັບພະຍາດລະບາດສັດ ຊຶ່ງກຳລັງລະບາດ ເຂົ້າ ຫລື ອອກ ເຂດດັ່ງກ່າວ ເວັ້ນເສຍແຕ່ໄດ້ຮັບອະນຸຍາດເປັນລາຍລັກອັກສອນ ຈາກອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດທີ່ກ່ຽວຂ້ອງ.

**ມາດຕາ 9. ການປະກອບເອກະສານຂໍເຄື່ອນຍ້າຍໃນເຂດເຫລືອງ**

ບຸກຄົນ ຫລື ນິຕິບຸກຄົນໃດໜຶ່ງ ມີຈຸດປະສົງຢາກເຄື່ອນຍ້າຍສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ໃຫ້ປະກອບເອກະສານ ດັ່ງນີ້:

1. ໃບຄຳຮ້ອງ ຂໍອະນຸຍາດການເຄື່ອນຍ້າຍ;
2. ໃບທະບຽນພິມສັດ;

3. ໃບທະບຽນພາມ ແລະ/ຫລື ໃບຢັ້ງຢືນກຳມະສິດ;
4. ແຜນລະອຽດ ໃນການເຄື່ອນຍ້າຍ ແລະ ການຂົນສົ່ງ;

**ມາດຕາ 10. ການຍື່ນຄຳຮ້ອງຂໍເຄື່ອນຍ້າຍໃນເຂດເຫລືອງ**

ພາຍຫລັງປະກອບເອກະສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ເທິງນີ້ ໃຫ້ບຸກຄົນ, ນິຕິບຸກຄົນໃດໜຶ່ງ ທີ່ມີຈຸດປະສົງຢາກເຄື່ອນຍ້າຍສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ຍື່ນເອກະສານ ດັ່ງນີ້:

1. ຖ້າເຂດເຫລືອງ ຢູ່ໃນຂອບເຂດເມືອງ, ເທດສະບານ ໃຫ້ຍື່ນຄຳຮ້ອງຕໍ່ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ເມືອງ, ເທດສະບານ;
2. ຖ້າເຂດເຫລືອງ ຢູ່ໃນຂອບເຂດຫລາຍກວ່າໜຶ່ງເມືອງ, ເທດສະບານ ທີ່ຢູ່ໃນຂອບເຂດຂອງແຂວງ, ນະຄອນ ແມ່ນຍື່ນຄຳຮ້ອງຕໍ່ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ແຂວງ, ນະຄອນ.

**ມາດຕາ 11. ການກວດກາ ແລະ ອະນຸຍາດການເຄື່ອນຍ້າຍສັດພາຍໃນເຂດເຫລືອງ**

ເມື່ອອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດທີ່ກ່ຽວຂ້ອງ ໄດ້ຮັບເອກະສານ ພ້ອມດ້ວຍຄຳຮ້ອງແລ້ວ ໃຫ້ສົ່ງພະນັກງານວິຊາການສັດຕະວະແພດ ໄປກວດກາຢູ່ສະຖານທີ່ຕົວຈິງ ພາຍໃນສອງວັນ ນັບແຕ່ວັນໄດ້ຮັບເອກະສານເປັນຕົ້ນໄປ.

ພະນັກງານວິຊາການສັດຕະວະແພດ ຕ້ອງກວດກາຕົວຈິງ ຕາມຫລັກວິຊາການສັດຕະວະແພດ ເທົ່າທີ່ມີຄວາມຈຳເປັນຕາມກໍລະນີໃດໜຶ່ງ ດັ່ງນີ້:

1. ຖ້າພົບເຫັນສັດປ່ວຍ ໃຫ້ປິ່ນປົວສັດ ພ້ອມທັງບັນທຶກລາຍລະອຽດ ຂອງຢາສັດຕະວະແພດ ທີ່ນຳໃຊ້ໃນການປິ່ນປົວ;
2. ຖ້າເຫັນວ່າ ສັດຍັງແຂງແຮງ ໃຫ້ສັກຢາກັນພະຍາດລະບາດສັດ ພ້ອມທັງອອກ ໃບຢັ້ງຢືນການສັກຢາກັນພະຍາດລະບາດສັດ ຫລື ໃບຢັ້ງຢືນສຸຂະພາບສັດ ໃຫ້ແກ່ ເຈົ້າຂອງສັດ;
3. ກໍລະນີສົງໄສວ່າ ສັດຕິດເຊື້ອພະຍາດລະບາດສັດ ໃຫ້ແນະນຳເຈົ້າຂອງສັດ ຫລື ຜູ້ລ້ຽງສັດ ປະຕິບັດຕາມມາດຕະການໃດໜຶ່ງ ເປັນຕົ້ນ ການແຍກປ່ຽວສັດ ໃນໄລຍະເວລາໃດໜຶ່ງ ເພື່ອໃຫ້ແນ່ໃຈວ່າ ສັດດັ່ງກ່າວ ບໍ່ຕິດເຊື້ອພະຍາດ ຕາມບັນຊີພະຍາດສັດ ທີ່ໄດ້ກຳນົດໄວ້ ຫລື ພະຍາດອື່ນຂອງສັດ.

ພາຍຫລັງທີ່ແຍກປ່ຽວສັດດັ່ງກ່າວ ໄດ້ໄລຍະເວລາໃດໜຶ່ງທີ່ເຫັນວ່າຈຳເປັນແລ້ວ ແລະ ພະນັກງານສັດຕະວະແພດ ກໍມີຄວາມແນ່ໃຈວ່າ ສັດດັ່ງກ່າວ ບໍ່ຕິດເຊື້ອພະຍາດແລ້ວ ກໍໃຫ້ອອກໃບອະນຸຍາດເຄື່ອນຍ້າຍໄດ້.

ຖ້າຍັງສັງເກດເຫັນວ່າ ສັດ ຍັງມີອາການຕິດເຊື້ອພະຍາດ ກໍໃຫ້ປິ່ນປົວ, ແຍກປ່ຽວ ຫລື ຂ້າທຳລາຍສັດ ຕາມແຕ່ລະກໍລະນີ ພ້ອມທັງແຈ້ງເປັນລາຍລັກອັກສອນ ໃຫ້ຜູ້ຍື່ນຄຳຮ້ອງຂໍເຄື່ອນຍ້າຍຊາບທັນທີພາຍຫລັງທີ່ເຫັນວ່າສັດດັ່ງກ່າວ ຕິດເຊື້ອພະຍາດລະບາດສັດ. ພະນັກງານສັດຕະວະແພດ ອາດກຳນົດໃຫ້ນຳໃຊ້ສັດ ໃນຈຸດປະສົງໃດໜຶ່ງ ເທົ່ານັ້ນ.

ພະນັກງານສັດຕະວະແພດ ຕ້ອງລາຍງານເປັນລາຍລັກອັກສອນກ່ຽວກັບຜົນຂອງການກວດກາ ຢູ່ພາກສະໜາມຕົວຈິງ ກ່ຽວກັບການອະນຸຍາດການເຄື່ອນຍ້າຍ ແລະ ການປະຕິບັດມາດຕະການໃດໜຶ່ງ. ໃນກໍລະນີພົບພະຍາດໃນບັນຊີພະຍາດສັດ ໃຫ້ພະນັກງານສັດຕະວະແພດລາຍງານໃຫ້ຂັ້ນເທິງຂອງຕົນຊາບ ພາຍໃນວັນດຽວກັນນັ້ນ.

## ມາດຕາ 12. ການກວດກາ ແລະ ອະນຸຍາດການເຄື່ອນຍ້າຍພາຍໃນເຂດເຫລືອງ

ພະນັກງານສັດຕະວະແພດ ຕ້ອງກວດກາຕາມຫລັກວິຊາການສັດຕະວະແພດ ໂດຍອີງຕາມຜົນການກວດກາຢັ້ງຢືນ ຈາກຫ້ອງວິໄຈ ແລະ ໃຫ້ປະຕິບັດຕາມແຕ່ລະກໍລະນີໃດໜຶ່ງ ດັ່ງນີ້:

1. ກໍລະນີບໍ່ມີການປົນເປື້ອນຂອງເຊື້ອພະຍາດ ໃຫ້ອອກໃບອະນຸຍາດການເຄື່ອນຍ້າຍ ໃນວັນດຽວກັນ;
2. ກໍລະນີມີການປົນເປື້ອນດ້ວຍເຊື້ອພະຍາດ ໃຫ້ແນະນຳເຈົ້າຂອງຜະລິດຕະພັນສັດ ຫລື ຜູ້ທີ່ມີສ່ວນກ່ຽວຂ້ອງ ປະຕິບັດມາດຕະການໃດໜຶ່ງ ທີ່ເຫັນວ່າມີຄວາມຈຳເປັນ ເປັນຕົ້ນໃຫ້ທຳລາຍຖິ້ມ ຫລື ໃຫ້ນຳໃຊ້ສຳລັບຈຸດປະສົງສະເພາະໃດໜຶ່ງ ຕາມການແນະນຳຂອງສັດຕະວະແພດ.

ຜູ້ທີ່ໄດ້ຮັບອະນຸຍາດໃຫ້ເຄື່ອນຍ້າຍສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ຕ້ອງເຄື່ອນຍ້າຍພາຍໃນຊາວສີ່ຊົ່ວໂມງ ຫລັງຈາກໄດ້ຮັບການອະນຸຍາດໃຫ້ເຄື່ອນຍ້າຍ.

ພາຍຫລັງທີ່ໄດ້ຮັບການອະນຸຍາດໃຫ້ເຄື່ອນຍ້າຍແລ້ວ ເຈົ້າຂອງສັດ ຫລື ຜູ້ເຄື່ອນຍ້າຍ ຕ້ອງປະຕິບັດຕາມການແນະນຳ ຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ຢ່າງເຄັ່ງຄັດ ລວມທັງປະຕິບັດຕາມຂໍ້ຫ້າມຕ່າງໆ ທີ່ໄດ້ກຳນົດໄວ້ໃນໃບອະນຸຍາດເຄື່ອນຍ້າຍ.

ພະນັກງານສັດຕະວະແພດ ຕ້ອງແຈ້ງໃຫ້ເມືອງ, ເທດສະບານ, ແຂວງ ຫລື ນະຄອນປາຍທາງຊາບ ກ່ຽວກັບການເຄື່ອນຍ້າຍ ພ້ອມທັງລະບຸລາຍລະອຽດກ່ຽວກັບເສັ້ນທາງໃນການເຄື່ອນຍ້າຍ ແລະ ປະຕິບັດຂັ້ນຕອນ ແລະ ວິທີການກວດກາ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບ ຫລື ຄູ່ມືການກວດກາດ້ານສັດຕະວະແພດ.

## ມາດຕາ 13. ການເຄື່ອນຍ້າຍທົ່ວໄປ

ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ຄຸ້ມຄອງການເຄື່ອນຍ້າຍສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ໃນບໍລິເວນນອກເຂດແດງ ຫລື ເຂດເຫລືອງ ບົນພື້ນຖານການວິເຄາະຄວາມສ່ຽງ ແລະ ຜົນການວິເຄາະກ່ຽວກັບພະຍາດລະບາດສັດຈາກຫ້ອງວິໄຈ.

ການເຄື່ອນຍ້າຍສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ອອກຈາກບ້ານ, ເມືອງ, ເທດສະບານ, ແຂວງ, ນະຄອນ ທີ່ບໍ່ຢູ່ໃນເຂດແດງ ຫລື ເຂດເຫລືອງ ຕ້ອງຜ່ານການກວດກາດ້ານສຸຂະພາບສັດ ຈາກໜ່ວຍລ້ຽງສັດ ແລະ ສັດຕະວະແພດບ້ານ ແລະ ປະຕິບັດຕາມລະບຽບການ ທີ່ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ຂັ້ນສູນກາງ ວາງອອກ.

### ມາດຕາ 14. ການຂົນສົ່ງສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ

ຜູ້ຂົນສົ່ງສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ມີຈຸດປະສົງເຄື່ອນຍ້າຍເຂົ້າ ຫລື ອອກເຂດເຫລືອງ ທຸກຄັ້ງ ຕ້ອງນຳເອົາເອກະສານສຳລັບການເຄື່ອນຍ້າຍ ທີ່ອອກໃຫ້ໂດຍອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ຕິດຕົວໄປພ້ອມໃນເວລາຂົນສົ່ງ ຊຶ່ງຕ້ອງສະເໜີເອກະສານດັ່ງກ່າວ ຕໍ່ດ່ານກວດກາສັດ ຫລື ຕາມການຮ້ອງຂໍ ຂອງເຈົ້າໜ້າທີ່ສັດຕະວະແພດ ແລະ ຜູ້ຂົນສົ່ງເອງ ກໍຕ້ອງປະຕິບັດຕາມມາດຕະການ ຫລື ລະບຽບການເຄື່ອນຍ້າຍທີ່ໄດ້ກຳນົດໄວ້.

ສຳລັບການຂົນສົ່ງອອກຈາກບ້ານ, ເມືອງ, ເທດສະບານ, ແຂວງ ແລະ ນະຄອນ ທີ່ບໍ່ຢູ່ໃນເຂດເຫລືອງ ຕ້ອງຜ່ານການກວດກາ ດ້ານສຸຂະພາບສັດ ຈາກໜ່ວຍລ້ຽງສັດ ແລະ ສັດຕະວະແພດບ້ານ ແລະ ປະຕິບັດຕາມລະບຽບການ ທີ່ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ຂັ້ນສູນກາງ ວາງອອກ.

### ມາດຕາ 15. ການໂຈະການເຄື່ອນຍ້າຍ ຫລື ການປ່ຽນເສັ້ນທາງເຄື່ອນຍ້າຍ

ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ສາມາດໂຈະການອະນຸຍາດການເຄື່ອນຍ້າຍ ຖ້າມີກໍລະນີໃດໜຶ່ງ ດັ່ງນີ້:

1. ສົງໄສວ່າ ເກີດການລະບາດຂອງພະຍາດສັດ ຢູ່ເມືອງຕົ້ນທາງ ຫລື ເມືອງປາຍທາງ ຕາມທີ່ໄດ້ກຳນົດໄວ້ໃນບັນຊີພະຍາດສັດ;
2. ສົງໄສວ່າ ມີການຕິດເຊື້ອພະຍາດສັດ ໃນເວລາກວດກາຢູ່ດ່ານກວດກາສັດ ຫລື ສະຖານທີ່ໃດໜຶ່ງ ຕາມເສັ້ນທາງເຄື່ອນຍ້າຍ ຕາມທີ່ໄດ້ກຳນົດໄວ້ໃນບັນຊີພະຍາດສັດ;
3. ສົງໄສວ່າ ຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ເຄື່ອນຍ້າຍນັ້ນ ບໍ່ເໝາະສົມ ກັບຈຸດປະສົງທີ່ຈະນຳໄປໃຊ້ ໃນເວລາກວດກາຢູ່ດ່ານກວດກາສັດ ຫລື ສະຖານທີ່ໃດໜຶ່ງ ຕາມເສັ້ນທາງການເຄື່ອນຍ້າຍ.

ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ສາມາດປ່ຽນເສັ້ນທາງເຄື່ອນຍ້າຍໄດ້ ໂດຍກຳນົດເສັ້ນທາງອື່ນ ຖ້າຫາກມີກໍລະນີສົງໄສວ່າ ເກີດການລະບາດ ຂອງພະຍາດສັດ ຕາມທີ່ໄດ້ກຳນົດໄວ້ໃນບັນຊີພະຍາດສັດ ຢູ່ຕາມເສັ້ນທາງທີ່ຈະເຄື່ອນຍ້າຍ. ພະນັກງານສັດຕະວະແພດ ຕ້ອງແຈ້ງເຫດຜົນຂອງການໂຈະ ຫລື ການປ່ຽນເສັ້ນທາງ ໃຫ້ຜູ້ເຄື່ອນຍ້າຍ ຫລື ເຈົ້າຂອງສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ຊາບທັນທີ.

ສຳລັບຄ່າໃຊ້ຈ່າຍທັງໝົດ ກ່ຽວກັບການໂຈະ ຫລື ການປ່ຽນເສັ້ນທາງເຄື່ອນຍ້າຍ ແມ່ນໃຫ້ເຈົ້າຂອງສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ເປັນຜູ້ຮັບຜິດຊອບທັງໝົດ.

### ມາດຕາ 16. ການຍົກເລີກ ການອະນຸຍາດການເຄື່ອນຍ້າຍ

ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ສາມາດຍົກເລີກ ການອະນຸຍາດການເຄື່ອນຍ້າຍ ຖ້າມີກໍລະນີໃດໜຶ່ງ ດັ່ງນີ້:

1. ມີການຢັ້ງຢືນວ່າ ເກີດການລະບາດຂອງພະຍາດສັດ ຢູ່ເມືອງຕົ້ນທາງ ຫລື ເມືອງປາຍທາງ ຕາມທີ່ໄດ້ກຳນົດໄວ້ໃນບັນຊີພະຍາດສັດ;

2. ມີການຢັ້ງຢືນວ່າ ຕິດເຊື້ອພະຍາດສັດ ໃນເວລາກວດກາຢູ່ດ່ານກວດກາສັດ ຫລື ສະຖານທີ່ໃດໜຶ່ງ ຕາມເສັ້ນທາງເຄື່ອນຍ້າຍ ຕາມທີ່ໄດ້ກຳນົດໄວ້ໃນບັນຊີພະຍາດສັດ;
3. ພົບວ່າ ຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ເຄື່ອນຍ້າຍນັ້ນເສຍຄຸນນະພາບ, ບໍ່ເໝາະສົມ ກັບຈຸດປະສົງທີ່ຈະນຳໄປໃຊ້ ແລະ ຕ້ອງໄດ້ທຳລາຍຖິ້ມ ໃນເວລາກວດກາຢູ່ດ່ານກວດກາສັດ ຫລື ສະຖານທີ່ໃດໜຶ່ງ ຕາມເສັ້ນທາງການເຄື່ອນຍ້າຍ;
4. ມີການລະເມີດລະບຽບການເຄື່ອນຍ້າຍ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

ພະນັກງານສັດຕະວະແພດ ຕ້ອງຍົກເລີກການອະນຸຍາດການເຄື່ອນຍ້າຍສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ຕາມແຕ່ລະກໍລະນີທີ່ໄດ້ກຳນົດໄວ້ຂ້າງເທິງນີ້ ໂດຍແຈ້ງເຫດຜົນຂອງການຍົກເລີກ ເປັນລາຍລັກອັກສອນ ໃຫ້ແກ່ຜູ້ເຄື່ອນຍ້າຍ ຫລື ເຈົ້າຂອງຊາບ ແລະ ແຈ້ງໄປຍັງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດຕົ້ນທາງ ເພື່ອລົບລ້າງການອະນຸຍາດເຄື່ອນຍ້າຍດັ່ງກ່າວ.

ສຳລັບຄ່າໃຊ້ຈ່າຍທັງໝົດ ກ່ຽວກັບການຍົກເລີກການເຄື່ອນຍ້າຍ ແມ່ນໃຫ້ເຈົ້າຂອງສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ເປັນຜູ້ຮັບຜິດຊອບທັງໝົດ.

### ມາດຕາ 17. ພັນທະຂອງເຈົ້າຂອງ ຫລື ຜູ້ເຄື່ອນຍ້າຍ

ເຈົ້າຂອງ ຫລື ຜູ້ເຄື່ອນຍ້າຍ ມີພັນທະດັ່ງນີ້:

1. ໃນເວລາເຄື່ອນຍ້າຍນັ້ນ ເຈົ້າຂອງ ຫລື ຜູ້ເຄື່ອນຍ້າຍ ຫາກສົງໄສວ່າ ສັດທີ່ກຳລັງເຄື່ອນຍ້າຍ ສະແດງອາການພາຍນອກ ຂອງພະຍາດສັດ ຕ້ອງແຈ້ງໃຫ້ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດຕົ້ນທາງ ທີ່ອອກໃບອະນຸຍາດການເຄື່ອນຍ້າຍຊາບທັນທີ ແລະ ໃຫ້ຢຸດການເຄື່ອນຍ້າຍ ຈົນກວ່າພະນັກງານສັດຕະວະແພດ ມາກວດກາສັດທີ່ສົງໄສດັ່ງກ່າວ.
2. ຈ່າຍຄ່າບໍລິການດ້ານເຕັກນິກຕ່າງໆ ທີ່ກຳນົດໂດຍອົງການຄຸ້ມຄອງການລ້ຽງສັດ ແລະ ການສັດຕະວະແພດ;
3. ປະຕິບັດຕາມຂັ້ນຕອນ, ລະບຽບການ ແລະ ຄຳແນະນຳ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້;
4. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 3
## ການນຳເຂົ້າ

### ມາດຕາ 18. ເງື່ອນໄຂການນຳເຂົ້າ

ບຸກຄົນ ຫລື ນິຕິບຸກຄົນ ທີ່ມີຈຸດປະສົງນຳເຂົ້າ ສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ມາໃນ ສປປ ລາວ ໃຫ້ປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ມີໃບອະນຸຍາດນຳເຂົ້າ ທີ່ອອກໃຫ້ໂດຍອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ;

2. ມີໃບຢັ້ງຢືນສຸຂະພາບສັດ ຫລື ໃບຢັ້ງຢືນສຸຂານາໄມຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ອອກໃຫ້ໂດຍ ອົງການ ຫລື ເຈົ້າໜ້າທີ່ຂອງລັດທີ່ກ່ຽວຂ້ອງຂອງປະເທດຕົ້ນທາງ ໂດຍຖືກຕ້ອງຕາມເງື່ອນໄຂການນຳເຂົ້າ ຂອງ ສປປ ລາວ;
3. ມີເອກະສານອື່ນທີ່ກ່ຽວຂ້ອງ ຕາມການກຳນົດ ຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ໃນກໍລະນີນຳເຂົ້າ ເພື່ອລ້ຽງເປັນແນວພັນ;
4. ນຳເຂົ້າສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ຕາມດ່ານນຳເຂົ້າທີ່ກຳນົດໂດຍອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ;
5. ປະຕິບັດຕາມເງື່ອນໄຂອື່ນ ຕາມທີ່ໄດ້ກຳນົດໄວ້ໃນໝວດນີ້.

ໃນກໍລະນີຜູ້ນຳເຂົ້າໄດ້ຮັບການອະນຸຍາດນຳເຂົ້າແລ້ວກໍຕາມ ແຕ່ຫາກມີຜົນຂອງການວິເຄາະຄວາມສ່ຽງ ໂດຍອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ທີ່ຢັ້ງຢືນວ່າ ມີຄວາມສ່ຽງທີ່ຈະນຳເອົາເຊື້ອພະຍາດເຂົ້າມາແຜ່ລາມ ຫລື ນຳເອົາທາດເບື່ອເຂົ້າມາແຜ່ກະຈາຍ ຢູ່ພາຍໃນປະເທດນັ້ນ ແມ່ນບໍ່ອະນຸຍາດໃຫ້ນຳເຂົ້າ ແລະ ກໍຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນ ກ່ຽວກັບການຫ້າມນັ້ນ ໃຫ້ແກ່ຜູ້ນຳເຂົ້າຊາບ.

ຫ້າມຜູ້ນຳເຂົ້າ ນຳເຂົ້າປະເພດສັດ ທີ່ນອນຢູ່ໃນບັນຊີຫວງຫ້າມ ຊຶ່ງກຳນົດໂດຍອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ໃນກໍລະນີມີການລະບາດຂອງພະຍາດສັດໃນແຕ່ລະໄລຍະ.

## ມາດຕາ 19. ການກຳນົດລະບຽບການນຳເຂົ້າ

ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ກຳນົດລະບຽບການສະເພາະ ສຳລັບການນຳເຂົ້າບົນພື້ນຖານ ດັ່ງນີ້:

1. ມາດຕະຖານຂອງອົງການຈັດຕັ້ງສາກົນ;
2. ຜົນຂອງການວິເຄາະຄວາມສ່ຽງຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ໂດຍມີການກວດກາ ແລະ ປັບປຸງໃຫ້ທັນກັບສະພາບການໃນແຕ່ໄລຍະ ພ້ອມທັງເຜີຍແຜ່ໃຫ້ສາທາລະນະຊົນຊາບ;
3. ບໍ່ກຳນົດເງື່ອນໄຂຫ້າມນຳເຂົ້າ ສຳລັບພະຍາດທີ່ເຄີຍມີການລະບາດຢູ່ພາຍໃນປະເທດແລ້ວ ແລະ ໃນເວລານຳເຂົ້ານັ້ນ ກໍຍັງບໍ່ທັນຈັດຕັ້ງປະຕິບັດແຜນງານຄວບຄຸມພະຍາດດັ່ງກ່າວ ຢ່າງເປັນທາງການ.

## ມາດຕາ 20. ບັນຊີລາຍຊື່ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ

ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ຕ້ອງກຳນົດບັນຊີລາຍຊື່ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ຈຳເປັນຕ້ອງມີໃບຢັ້ງຢືນດ້ານສັດຕະວະແພດ ທີ່ອອກໂດຍເຈົ້າໜ້າທີ່ສັດຕະວະແພດ ຂອງປະເທດຕົ້ນທາງ ທີ່ໄດ້ມາດຕະຖານສາກົນ ແລະ ຕ້ອງໄດ້ເຜີຍແຜ່ບັນຊີ ດັ່ງກ່າວ ໃຫ້ແກ່ສາທາລະນະຊົນຊາບ ຢ່າງທົ່ວເຖິງ.

### ມາດຕາ 21. ການຂໍອະນຸຍາດນໍາເຂົ້າ

ບຸກຄົນ ຫລື ນິຕິບຸກຄົນໃດໜຶ່ງ ທີ່ມີຈຸດປະສົງ ນໍາເຂົ້າສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ມາໃນ ສປປ ລາວ ຕ້ອງຍື່ນຄໍາຮ້ອງຕໍ່ດ່ານກວດກາສັດຕະວະແພດ ບ່ອນທີ່ຈະນໍາເຂົ້າ ຢ່າງໜ້ອຍ ສິບຫ້າວັນ ກ່ອນວັນນໍາເຂົ້າຕົວຈິງ ໂດຍນໍາໃຊ້ແບບພິມຄໍາຮ້ອງຂໍນໍາເຂົ້າ ພ້ອມທັງປະກອບເອກະສານ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 18 ຂອງດໍາລັດສະບັບນີ້ ແລະ ຈ່າຍຄ່າທໍານຽມ ແລະ ຄ່າບໍລິການ ທາງດ້ານສັດຕະວະແພດ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

ບຸກຄົນ ຫລື ນິຕິບຸກຄົນໃດໜຶ່ງ ທີ່ມີຈຸດປະສົງນໍາເຂົ້າສັດ ເພື່ອເປັນແນວພັນ ຕ້ອງຍື່ນຄໍາຮ້ອງຕໍ່ເຈົ້າໜ້າທີ່ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ຂັ້ນສູນກາງ ຢ່າງໜ້ອຍ ສິບຫ້າວັນ ກ່ອນວັນນໍາເຂົ້າຕົວຈິງ ພ້ອມທັງປະກອບເອກະສານ ແລະ ສະໜອງຂໍ້ມູນລະອຽດ ດັ່ງນີ້:

1. ວັນທີນໍາເຂົ້າ;
2. ດ່ານນໍາເຂົ້າ;
3. ປະເພດສັດ ພ້ອມທັງຈໍານວນລະອຽດ;
4. ພາຫານະທີ່ໃຊ້ຂົນສົ່ງ;
5. ສະຖານທີ່ປາຍທາງ;
6. ໃບຢັ້ງຢືນກ່ຽວກັບການເປັນເຈົ້າຂອງ ຫຼື ຜູ້ຂົນສົ່ງ;
7. ຂໍ້ມູນອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 22. ການກວດກາເອກະສານ ແລະ ການອະນຸຍາດ

ເມື່ອໄດ້ຮັບຄໍາຮ້ອງ ຫລື ເອກະສານ ກ່ຽວກັບການນໍາເຂົ້າແລ້ວ ໃຫ້ຫົວໜ້າດ່ານກວດກາສັດຕະວະແພດ ບ່ອນທີ່ນໍາເຂົ້າສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ພິຈາລະນາອະນຸຍາດໃຫ້ນໍາເຂົ້າ ຫລື ບໍ່ໃຫ້ນໍາເຂົ້າ ຕາມແຕ່ລະກໍລະນີ ດັ່ງນີ້:

1. ໃຫ້ນໍາເຂົ້າສັດ ເພື່ອເປັນແນວພັນ ໃນກໍລະນີອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ຂັ້ນສູນກາງ ໄດ້ອອກໃບອະນຸຍາດໃຫ້ນໍາເຂົ້າ;
2. ອະນຸຍາດໃຫ້ນໍາເຂົ້າສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ນໍາເຂົ້າ ເພື່ອຈຸດປະສົງອື່ນ ນອກຈາກເຮັດເປັນແນວພັນ ໂດຍອີງໃສ່ການປະເມີນຄວາມສ່ຽງ ຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ;
3. ບໍ່ອະນຸຍາດໃຫ້ນໍາເຂົ້າສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ໃນກໍລະນີມີຄວາມສ່ຽງ ທີ່ຈະນໍາເອົາເຊື້ອພະຍາດເຂົ້າມາແຜ່ລາມ ຫລື ນໍາເອົາທາດເບື່ອເຂົ້າມາແຜ່ກະຈາຍຢູ່ພາຍໃນປະເທດ ພ້ອມທັງແຈ້ງເຫດຜົນເປັນລາຍລັກອັກສອນ ໃຫ້ຜູ້ຂໍນໍາເຂົ້າຊາບ ຢ່າງຊ້າບໍ່ໃຫ້ກາຍ ສິບຫ້າວັນ;

ເມື່ອໄດ້ຮັບຄໍາຮ້ອງ ຫລື ເອກະສານກ່ຽວກັບການນໍາເຂົ້າແລ້ວ ໃຫ້ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດຂັ້ນສູນກາງ ພິຈາລະນາອະນຸຍາດ ໃຫ້ນໍາເຂົ້າ ຫລື ບໍ່ໃຫ້ນໍາເຂົ້າ ຕາມແຕ່ລະກໍລະນີ. ກໍລະນີອະນຸຍາດໃຫ້ນໍາເຂົ້າສັດ ເພື່ອເປັນແນວພັນ ແມ່ນໃຫ້

ອອກໃບອະນຸຍາດນຳເຂົ້າ ຫລື ຖ້າຫາກບໍ່ອະນຸຍາດໃຫ້ນຳເຂົ້າ ແມ່ນໃຫ້ແຈ້ງເຫດຜົນເປັນລາຍລັກອັກສອນ ໃຫ້ຜູ້ຮ້ອງຂໍຊາບ ພາຍໃນກຳນົດເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບເອກະສານຄຳຮ້ອງ ເປັນຕົ້ນໄປ.

ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ຕ້ອງເກັບຮັກສາເອກະສານຄຳຮ້ອງຂໍນຳເຂົ້າ ແລະ ເອກະສານອື່ນທີ່ກ່ຽວຂ້ອງໄວ້ ໃນກຳນົດເວລາຫ້າປີ.

**ມາດຕາ 23. ການໂຈະການອະນຸຍາດໃຫ້ນຳເຂົ້າ**

ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ອາດໂຈະການອະນຸຍາດໃຫ້ນຳເຂົ້າ ໄວ້ຊົ່ວຄາວ ໃນເວລາເກີດມີການລະບາດຂອງພະຍາດສັດ ຕາມທີ່ໄດ້ກຳນົດໄວ້ໃນບັນຊີພະຍາດສັດ ຢູ່ປະເທດທີ່ສົ່ງອອກ ແລະ ພະຍາດດັ່ງກ່າວ ກໍບໍ່ໄດ້ລະບາດ ຢູ່ ສປປ ລາວ ຊຶ່ງການອະນຸຍາດໃຫ້ນຳເຂົ້າສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດດັ່ງກ່າວ ຈະນຳຄວາມສ່ຽງທີ່ພາໃຫ້ເກີດພະຍາດລະບາດສັດໃດໜຶ່ງ.

ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ສັ່ງຍົກເລີກການໂຈະການນຳເຂົ້າ ເມື່ອເຫັນວ່າ ປະເທດຜູ້ສົ່ງອອກ ໄດ້ປະກາດຢ່າງເປັນທາງການ ກ່ຽວກັບແຜນການຄວບຄຸມພະຍາດດັ່ງກ່າວ ໄດ້ປະສົບຜົນສຳເລັດເປັນທີ່ໜ້າພໍໃຈແລ້ວ.

ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ຕ້ອງແຈ້ງເຫດຜົນເປັນລາຍລັກສອນ ໃຫ້ເຈົ້າໜ້າທີ່ສັດຕະວະແພດ ຂອງປະເທດທີ່ສົ່ງອອກ ແລະ ອົງການພະຍຸສັດສາກົນຊາບ ກ່ຽວກັບການໂຈະ ຫລື ສັ່ງຍົກເລີກການໂຈະດັ່ງກ່າວ.

**ມາດຕາ 24. ຂັ້ນຕອນການນຳເຂົ້າ**

ການນຳເຂົ້າສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ໃຫ້ປະຕິບັດ ຕາມຂັ້ນຕອນ ດັ່ງນີ້:

1. ຜູ້ນຳເຂົ້າ ຍື່ນໃບອະນຸຍາດນຳເຂົ້າ, ໃບຢັ້ງຢືນດ້ານສັດຕະວະແພດ ຂອງປະເທດຕົ້ນທາງ ແລະ ເອກະສານອື່ນ ຕໍ່ພະນັກງານສັດຕະວະແພດປະຈຳດ່ານທີ່ຈະນຳເຂົ້າ ລ່ວງໜ້າ ຢ່າງໜ້ອຍ ໜຶ່ງວັນ ກ່ອນການນຳເຂົ້າຕົວຈິງ;
2. ຜູ້ນຳເຂົ້າ ແຈ້ງເອກະສານກ່ຽວກັບການນຳເຂົ້າຕົວຈິງ ຕໍ່ເຈົ້າໜ້າທີ່ປະຈຳດ່ານກວດກາສັດຕະວະແພດ ໃນເວລາສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດມາເຖິງ;
3. ພະນັກງານສັດຕະວະແພດ ປະຈຳດ່ານກວດກາດ້ານສັດຕະວະແພດ ດຳເນີນການກວດກາ ທາງດ້ານສັດຕະວະແພດ ຕາມທີ່ໄດ້ກຳນົດ ໄວ້ໃນມາດຕາ 46 ຂອງດຳລັດສະບັບນີ້;
4. ຫົວໜ້າດ່ານກວດກາສັດຕະວະແພດ ແຈ້ງຜົນຂອງການກວດກາດ້ານສັດຕະວະແພດ, ການອະນຸຍາດໃຫ້ນຳເຂົ້າ ແລະ ໃຫ້ຄຳແນະນຳ ກ່ຽວກັບການກັກກັນສັດໃຫ້ຜູ້ນຳເຂົ້າຊາບ.

ໃນກໍລະນີເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ຫາກສົງໄສວ່າ ສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ຕິດພະຍາດລະບາດສັດ ຫລື ມາຈາກຝູງສັດທີ່ມີພະຍາດສັດລະບາດ ຫລື ບໍ່ມີເອກະສານຢັ້ງຢືນສຸຂະພາບສັດ ຫລື ໃບຢັ້ງຢືນສຸຂານາໄມ ໃນເວລາ

ນຳເຂົ້າ ຫລື ມີເອກະສານ ບໍ່ຄົບຖ້ວນ ຫລື ບໍ່ຖືກກັບເງື່ອນໄຂ ທີ່ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ກຳນົດນັ້ນ ໃຫ້ດ່ານກວດກາສັດຕະວະແພດກັກໄວ້ ເພື່ອພິສູດທາງດ້ານວິຊາການໄດ້ ໃນກຳນົດເວລາ ບໍ່ເກີນຫົກສິບວັນ ສຳລັບການນຳເຂົ້າສັດທີ່ມີຊີວິດ ຫລື ໃນກຳນົດເວລາ ບໍ່ເກີນສິບວັນ ສຳລັບຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ. ຄ່າໃຊ້ຈ່າຍ ສຳລັບການກັກ ເພື່ອກວດກາ ແມ່ນຄວາມຮັບຜິດຊອບຂອງຜູ້ນຳເຂົ້າ.

ຜູ້ນຳເຂົ້າ ອາດຖືກປັບໃໝ ຫລື ດຳເນີນຄະດີ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ ຕາມກໍລະນີເບົາ ຫລື ໜັກ ໃນກໍລະນີມີການລະເມີດລະບຽບການ ແລະ ຂັ້ນຕອນການນຳເຂົ້າ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ໃນກໍລະນີເຫັນວ່າ ການນຳເຂົ້າບໍ່ຖືກຕ້ອງ ຫລື ພົບສັດຕາຍ, ສະແດງອາການ ຂອງພະຍາດລະບາດ ຫລື ພົບຜະລິດຕະພັນສັດ, ຜະລິດຕະພັນສິນຄ້າກ່ຽວກັບສັດ ເສຍຄຸນ ໃຫ້ເຈົ້າໜ້າທີ່ສັດຕະວະແພດປະຕິບັດຕາມ ມາດຕາ 48 ຂອງກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ.

ໃນກໍລະນີຜູ້ນຳເຂົ້າ ບໍ່ສາມາດຂົນສົ່ງສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ອອກຈາກດ່ານກວດກາສັດ ພາຍໃນກຳນົດເວລາ ສາມສິບວັນ ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ມີສິດທຳລາຍຖິ້ມ.

**ມາດຕາ 25. ການກວດກາການນຳເຂົ້າ**

ພະນັກງານສັດຕະວະແພດປະຈຳດ່ານ ຕ້ອງກວດກາການນຳເຂົ້າ ໃນໂມງລັດຖະການ ແລະ ຕ້ອງກວດກາ ໃຫ້ສຳເລັດກ່ອນການກວດກາຂອງເຈົ້າໜ້າທີ່ພາສີ.

ພະນັກງານສັດຕະວະແພດປະຈຳດ່ານ ຕ້ອງກວດກາດ້ານສັດຕະວະແພດ ຕາມແຕ່ລະກໍລະນີ ດັ່ງນີ້:

1. ໃນກໍລະນີທີ່ເຫັນວ່າ ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ນຳເຂົ້າ ບໍ່ຖືກຕ້ອງ ຫລື ບໍ່ກົງກັບຂໍ້ມູນ ທີ່ໄດ້ແຈ້ງໄວ້ໃນຄຳຮ້ອງຂໍອະນຸຍາດນຳເຂົ້ານັ້ນ ໃຫ້ຜູ້ນຳເຂົ້າ ຍື່ນຄຳຮ້ອງຂໍອະນຸຍາດນຳເຂົ້າສະບັບໃໝ່ ຊຶ່ງໃນກໍລະນີດັ່ງກ່າວ ແມ່ນບໍ່ອະນຸຍາດໃຫ້ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດຜ່ານໄດ້;
2. ໃນກໍລະນີທີ່ເຫັນວ່າ ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ນຳເຂົ້າ ບໍ່ມີຄວາມສ່ຽງທີ່ຈະນຳເອົາເຊື້ອພະຍາດເຂົ້າມາແຜ່ລາມ ຫລື ນຳເອົາທາດເບື່ອ ເຂົ້າມາແຜ່ກະຈາຍຢູ່ພາຍໃນປະເທດ ແມ່ນບໍ່ມີຄວາມຈຳເປັນຕ້ອງກັກກັນ ແລະ ໃຫ້ຫົວໜ້າດ່ານກວດກາສັດຕະວະແພດ ອະນຸຍາດໃຫ້ນຳເຂົ້າໄດ້;
3. ໃນກໍລະນີທີ່ເຫັນວ່າ ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ອາດມີຄວາມສ່ຽງ ທີ່ຈະນຳເອົາເຊື້ອພະຍາດເຂົ້າມາແຜ່ລາມ ຫລື ນຳເອົາທາດເບື່ອ ເຂົ້າມາແຜ່ກະຈາຍຢູ່ພາຍໃນປະເທດ ຫລື ເອກະສານ ທີ່ໄດ້ແຈ້ງກ່ຽວກັບການນຳເຂົ້າ ແລະ ຂົນສົ່ງ ນັ້ນບໍ່ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນ ລະບຽບການກ່ຽວກັບການນຳເຂົ້າ ໃຫ້ຫົວໜ້າດ່ານກວດ

ກາສັດຕະວະແພດ ໂຈະການນຳເຂົ້າ ພ້ອມທັງແຈ້ງເຫດຜົນເປັນລາຍລັກອັກສອນ ໃຫ້ແກ່ຜູ້ນຳເຂົ້າຊາບ ແລະ ປະຕິບັດມາດຕະການໃດໜຶ່ງ ຫລື ຫລາຍມາດຕະການ ດັ່ງນີ້:

- ເກັບຕົວຢ່າງ ເພື່ອນຳໄປວິໄຈ;
- ສັ່ງໃຫ້ນຳສັດໄປໄວ້ ຢູ່ສະຖານທີ່ກັກກັນ ຫລື ສະຖານທີ່ອື່ນ ທີ່ທາງການກຳນົດ ເພື່ອດຳເນີນການວິໄຈ ຫລື ຂ້າເຊື້ອ;
- ສັ່ງໃຫ້ນຳຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ໄປເກັບຮັກສາໄວ້ໃນສາງ ຫລື ສະຖານທີ່ອື່ນ ທີ່ທາງການກຳນົດ ເພື່ອດຳເນີນການວິໄຈ ຫລື ຂ້າເຊື້ອ;
- ສົ່ງສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດນັ້ນ ກັບຄືນປະເທດຕົ້ນທາງ;
- ສັ່ງໃຫ້ນຳເອົາສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ໄປທຳລາຍຖິ້ມ ໂດຍມີການຄຸ້ມຄອງ ແລະ ຕິດຕາມ ຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

ໃນການນຳໃຊ້ມາດຕະການໃດໜຶ່ງ ຫລື ຫລາຍມາດຕະການ ຕາມທີ່ໄດ້ກຳນົດໄວ້ເທິງນີ້ ໃຫ້ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ເຮັດບົດບັນທຶກ ແລະ ສົ່ງສຳເນົາເອກະສານ ກ່ຽວກັບເຫດຜົນທີ່ໄດ້ບັນທຶກໄວ້ນັ້ນ ໄປຍັງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ໃນວັນດຽວກັນ.

ພະນັກງານສັດຕະວະແພດປະຈຳດ່ານ ສາມາດກວດກາການນຳເຂົ້ານອກໂມງລັດຖະການໄດ້ ໃນເວລາມີການນຳເຂົ້າສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ຕາມແຕ່ລະກໍລະນີ ດັ່ງນີ້:

- ຜະລິດຕະພັນສັດ ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ເນົ່າເປື່ອຍໄວ;
- ສັດ, ຜະລິດຕະພັນສັດ ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ມີຈຳນວນ ຫລື ບໍລິ ມາດຫລວງຫລາຍ;
- ມີຄວາມຈຳເປັນຕ້ອງແຍກປ່ຽວສັດ ຫລື ກັກກັນສັດທັນທີ;
- ມີຄວາມຈຳເປັນທາງດ້ານພາວະວິໄສໃດໜຶ່ງ.

**ມາດຕາ 26. ການກວດກາຫລັງການນຳເຂົ້າ**

ເມື່ອຜູ້ນຳເຂົ້າ ໄດ້ນຳສັດເຂົ້າມາໃນ ສປປ ລາວ ໃນກຳນົດເວລາ ສິບວັນ ນັບແຕ່ວັນທີ່ໄດ້ນຳເຂົ້າຕົວຈິງ ພະນັກງານສັດຕະວະແພດ ສາມາດກວດກາ ຫລື ເຝົ້າລະວັງ ເພື່ອຕິດຕາມສຸຂະພາບຂອງສັດ.

**ມາດຕາ 27. ການຍົກເລີກການອະນຸຍາດໃຫ້ນຳເຂົ້າ**

ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ມີສິດຍົກເລີກການອະນຸຍາດນຳເຂົ້າ ໃນກໍລະນີທີ່ຜູ້ນຳເຂົ້າ ບໍ່ປະຕິບັດຕາມລະບຽບການ, ເງື່ອນໄຂ ແລະ ຂັ້ນຕອນທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແລະ ແຈ້ງເຫດຜົນຂອງການຍົກເລີກເປັນລາຍລັກອັກສອນໃຫ້ແກ່ຜູ້ນຳເຂົ້າຊາບ ຢ່າງຊ້າ ບໍ່ເກີນສາມວັນ ນັບແຕ່ວັນທີ່ຕົກລົງຍົກເລີກດັ່ງກ່າວ.

**ມາດຕາ 28. ການຮ່ວມມື ແລະ ການປະສານສົມທົບ ຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງ**

ເມື່ອສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ມາເຖິງດ່ານ ໃຫ້ເຈົ້າໜ້າທີ່ພາສີ ຫລື ເຈົ້າໜ້າທີ່ອື່ນທີ່ກ່ຽວຂ້ອງ ແຈ້ງໃຫ້ພະນັກງານສັດຕະວະແພດປະຈຳດ່ານຊາບທັນທີ ແລະ ບໍ່ໃຫ້ມີການກະທຳອື່ນ ຫລື ອະນຸຍາດໃຫ້ເອົາສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ເຂົ້າ ໂດຍບໍ່ມີການກວດກາດ້ານສັດຕະວະແພດ ຂອງພະນັກງານສັດຕະວະແພດ ຫລື ບໍ່ໄດ້ຮັບການຕົກລົງເຫັນດີຈາກ ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ.

ຜູ້ນຳເຂົ້າ, ຜູ້ໃຫ້ບໍລິການໄປສະນີ, ຕົວແທນບໍລິສັດຂົນສົ່ງເອກະຊົນ ແລະ ເຈົ້າໜ້າທີ່ອື່ນທີ່ກ່ຽວຂ້ອງ ຕ້ອງແຈ້ງຕໍ່ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ໃນເວລາສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ມາເຖິງ.

**ມາດຕາ 29. ການແຈ້ງ ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ**

ບຸກຄົນ ຫລື ນິຕິບຸກຄົນທີ່ນຳເຂົ້າສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ເຂົ້າມາ ສປປ ລາວ ຕ້ອງແຈ້ງເຈົ້າໜ້າທີ່ສັດຕະວະແພດ, ເຈົ້າໜ້າທີ່ພາສີ ແລະ ເຈົ້າໜ້າທີ່ອື່ນທີ່ກ່ຽວຂ້ອງທັນທີ ໃນເວລາສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ມາເຖິງດ່ານ.

ບຸກຄົນ ຫລື ນິຕິບຸກຄົນ ທີ່ໃຫ້ການບໍລິການໂດຍສານ ໂດຍເຮືອບິນ, ລົດເມ, ລົດໄຟ, ເຮືອ ແລະ ຮູບແບບການເດີນທາງອື່ນ ທັງພາຍໃນ ແລະ ຕ່າງປະເທດ ຕ້ອງແຈ້ງໃຫ້ຜູ້ໂດຍສານຊາບກ່ຽວກັບການແຈ້ງການນຳເຂົ້າສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດຕໍ່ເຈົ້າໜ້າທີ່ສັດຕະວະແພດ ແລະ ເຈົ້າໜ້າທີ່ອື່ນທີ່ກ່ຽວຂ້ອງ.

**ມາດຕາ 30. ການນຳເອົາສັດລ້ຽງຕິດຕາມຕົວເຂົ້າມານຳ**

ບຸກຄົນໃດ ທີ່ມີຈຸດປະສົງນຳເອົາ ສັດລ້ຽງຕິດຕາມຕົວຂອງຕົນເຂົ້າມາໃນ ສປປ ລາວ ໃຫ້ຍື່ນຄຳຮ້ອງຂໍອະນຸຍາດນຳເຂົ້າກ່ອນການນຳເຂົ້າຕົວຈິງ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 21 ຂອງດຳລັດສະບັບນີ້ ຫລື ຍື່ນໃນວັນທີ່ນຳເຂົ້າຕົວຈິງ.

# ໝວດທີ 4
# ການສົ່ງອອກ

## ມາດຕາ 31. ການຂໍອະນຸຍາດສົ່ງອອກ

ບຸກຄົນ ຫລື ນິຕິບຸກຄົນໃດ ທີ່ມີຈຸດປະສົງ ສົ່ງອອກສັດທີ່ບໍ່ແມ່ນແນວພັນ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ຕ້ອງຍື່ນຄຳຮ້ອງ ຢູ່ດ່ານທີ່ຈະນຳອອກ ຢ່າງໜ້ອຍ ສິບຫ້າວັນ ກ່ອນວັນທີ່ສົ່ງອອກຕົວຈິງ ໂດຍໃຊ້ແບບພິມຄຳຮ້ອງຂໍອະນຸຍາດສົ່ງອອກ.

ບຸກຄົນ ຫລື ນິຕິບຸກຄົນ ໃດທີ່ມີຈຸດປະສົງ ສົ່ງອອກສັດ ເພື່ອເປັນແນວພັນ ຕ້ອງຍື່ນຄຳຮ້ອງ ໄປຍັງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດຂັ້ນສູນກາງ ຢ່າງໜ້ອຍ ສິບຫ້າວັນ ກ່ອນການສົ່ງອອກຕົວຈິງ ໂດຍນຳໃຊ້ແບບພິມຄຳຮ້ອງຂໍອະນຸຍາດສົ່ງອອກ.

ຄ່າໃຊ້ຈ່າຍກ່ຽວກັບການບໍລິການດ້ານເຕັກນິກ ແລະ ຄ່າທຳນຽມ ຕາມທີ່ໄດ້ກຳນົດໄວ້ ໃນລະບຽບການທີ່ກ່ຽວຂ້ອງ ແມ່ນເປັນພາລະຂອງຜູ້ສົ່ງອອກທັງໝົດ.

## ມາດຕາ 32. ການຢັ້ງຢືນການກວດກາດ້ານສັດຕະວະແພດ

ເມື່ອໄດ້ຮັບຄຳຮ້ອງຂໍອະນຸຍາດສົ່ງອອກ ໃຫ້ພະນັກງານສັດຕະວະແພດ ຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ກວດກາດ້ານສັດຕະວະແພດ ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ແລ້ວອອກໃບຢັ້ງຢືນການກວດກາ ດ້ານສັດຕະວະແພດ ໃນກໍລະນີທີ່ເຫັນວ່າ ບໍ່ມີຄວາມສ່ຽງຕໍ່ການຕິດເຊື້ອ ຫລື ປົນເປື້ອນເຊື້ອ ພະຍາດ ຫລື ທາດເບື່ອ. ຍົກເວັ້ນກໍລະນີທີ່ເຫັນວ່າ ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນ ສິນຄ້າກ່ຽວກັບສັດ ມີຄວາມສ່ຽງຕໍ່ການຕິດເຊື້ອ ຫລື ການປົນເປື້ອນເຊື້ອພະຍາດ ຫລື ບໍ່ຖືກ ຕ້ອງຕາມລະບຽບການ ແລະ ເງື່ອນໄຂຂອງປະເທດທີ່ຈະນຳເຂົ້ານັ້ນ ໃຫ້ພະນັກງານສັດຕະວະ ແພດ ຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ໃຊ້ວິທີການໃດໜຶ່ງ ທີ່ເໝາະສົມ ເພື່ອຫລຸດຜ່ອນ ຫລື ຈຳກັດຄວາມສ່ຽງ ທີ່ອາດເກີດຂຶ້ນ ຕາມແຕ່ລະກໍລະນີ ດັ່ງນີ້:

1. ວິເຄາະ, ວິໄຈ, ສັກຢາກັນ ຫລື ອະນາໄມຂ້າເຊື້ອພະຍາດ;
2. ກວດກາ, ຮັບຮອງ ແລະ ປະຕິບັດຕາມຂັ້ນຕອນການອອກໃບຢັ້ງຢືນການກວດກາດ້ານ ສັດຕະວະແພດ ແລະ ໃຫ້ນຳເອົາສັດ, ຜະລິດຕະພັນສັດ ແລະຜະລິດຕະພັນສິນຄ້າ ກ່ຽວກັບສັດ ໄປຮັກສາ ຫລື ເກັບມ້ຽນຢູ່ສະຖານທີ່ ທີ່ເໝາະສົມ ແລະ ປອດໄພ ຈົນເຖິງ ວັນທີ່ສົ່ງອອກຕົວຈິງ;
3. ສັງເກດສັດ ໃນເວລາຂົນສົ່ງຈາກສະຖານທີ່ເກັບຮັກສາ ໄປຫາຈຸດປ່ອຍອອກ;
4. ສົ່ງແຈ້ງການລ່ວງໜ້າເປັນລາຍລັກອັກສອນ ໄປຍັງປະເທດທີ່ຈະນຳເຂົ້າ.

ສຳລັບຂັ້ນຕອນການອອກໃບຢັ້ງຢືນການກວດກາດ້ານສັດຕະວະແພດ ແມ່ນກຳນົດໄວ້ໃນ ລະບຽບການ ຫລື ຄູ່ມືການກວດກາດ້ານສັດຕະວະແພດ ຂອງອົງການຄຸ້ມຄອງວຽກງານການ ລ້ຽງສັດ ແລະ ການສັດຕະວະແພດ.

ມາດຕາ 33. ການອອກໃບອະນຸຍາດສົ່ງອອກ

ເມື່ອໄດ້ຮັບຄຳຮ້ອງ, ໃບຢັ້ງຢືນການກວດກາດ້ານສັດຕະວະແພດ ແລະ ເອກະສານອື່ນ ກ່ຽວກັບການຂໍອະນຸຍາດສົ່ງອອກ ໃຫ້ພະນັກງານສັດຕະວະແພດ ຂອງອົງການຄຸ້ມຄອງວຽກງານ ການລ້ຽງສັດ ແລະ ການສັດຕະວະແພດ ພິຈາລະນາອອກໃບອະນຸຍາດສົ່ງອອກ ພາຍໃນກຳນົດ ສິບຫ້າວັນ ນັບແຕ່ວັນໄດ້ຮັບເອກະສານຄົບຖ້ວນ.

ມາດຕາ 34. ຂັ້ນຕອນການກວດກາ ແລະ ການສົ່ງອອກ

ການສົ່ງອອກສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ໃຫ້ປະຕິບັດ ຕາມຂັ້ນຕອນ ດັ່ງນີ້:

1. ຜູ້ສົ່ງອອກ ຍື່ນໃບອະນຸຍາດສົ່ງອອກ, ໃບຢັ້ງຢືນກວດກາດ້ານສັດຕະວະແພດ ແລະ ເອກະສານອື່ນທີ່ກ່ຽວຂ້ອງ ຕໍ່ພະນັກງານສັດຕະວະແພດປະຈຳດ່ານທີ່ຈະສົ່ງອອກ ລ່ວງໜ້າຢ່າງໜ້ອຍ ໜຶ່ງວັນ ກ່ອນການສົ່ງອອກຕົວຈິງ;
2. ຜູ້ສົ່ງອອກ ແຈ້ງເອກະສານກ່ຽວກັບການສົ່ງອອກຕົວຈິງ ຕໍ່ເຈົ້າໜ້າທີ່ປະຈຳດ່ານກວດກາສັດຕະວະແພດ ໃນເວລາ ສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ມາເຖິງດ່ານ;
3. ພະນັກງານສັດຕະວະແພດ ປະຈຳດ່ານ ກວດກາເອກະສານ ແລະ ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 46 ຂອງດຳລັດສະບັບນີ້;
4. ຫົວໜ້າດ່ານກວດກາສັດຕະວະແພດ ແຈ້ງຜົນຂອງການກວດກາ, ການອະນຸຍາດໃຫ້ສົ່ງອອກ ແລະ ໃຫ້ຄຳແນະນຳອື່ນທີ່ກ່ຽວຂ້ອງ ໃຫ້ຜູ້ສົ່ງອອກຊາບ.

ໃນເວລາກວດກາເອກະສານ ແລະ ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ພະນັກງານສັດຕະວະແພດ ຕ້ອງປະຕິບັດຕາມລະບຽບການ ແລະ ເງື່ອນໄຂ ຂອງປະເທດນຳເຂົ້າ ຢ່າງເຄັ່ງຄັດ ແລະ ຜູ້ສົ່ງອອກ ຕ້ອງສົ່ງສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ອອກພາຍໃນກຳນົດເວລາ ເຈັດວັນນັບແຕ່ວັນໄດ້ຮັບໃບອະນຸຍາດສົ່ງອອກ.

ມາດຕາ 35. ການນຳເອົາສັດລ້ຽງຕິດຕາມຕົວໄປນຳ

ບຸກຄົນໃດ ມີຈຸດປະສົງ ນຳເອົາສັດລ້ຽງຕິດຕາມຕົວຂອງຕົນ ອອກ ສປປ ລາວ ຕ້ອງຍື່ນແບບພິມຄຳຮ້ອງຂໍອະນຸຍາດ ໄປຍັງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 21 ຂອງດຳລັດສະບັບນີ້ ພ້ອມທັງປະຕິບັດຕາມຄຳແນະນຳ ຂອງພະນັກງານສັດຕະວະແພດ ຢ່າງເຄັ່ງຄັດ ແລະ ຈ່າຍຄ່າບໍລິການດ້ານເຕັກນິກ, ຄ່າທຳນຽມ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

# ໝວດທີ 5
# ການຂົນສົ່ງຜ່ານ ສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ

**ມາດຕາ 36. ການອະນຸຍາດຂົນສົ່ງຜ່ານ**

ບຸກຄົນ ຫລື ນິຕິບຸກຄົນ ທີ່ມີຈຸດປະສົງຂົນສົ່ງຜ່ານ ສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ຕ້ອງຍື່ນໃບຄຳຮ້ອງຂໍຂົນສົ່ງຜ່ານ, ໃບຢັ້ງຢືນສຸຂະພາບສັດ ຫລື ໃບຢັ້ງຢືນສຸຂານາໄມ ທີ່ອອກໃຫ້ໂດຍອົງການ ຫລື ເຈົ້າໜ້າທີ່ຂອງລັດທີ່ກ່ຽວຂ້ອງ ຂອງປະເທດຕົ້ນທາງ ໂດຍຖືກຕ້ອງຕາມເງື່ອນໄຂການນຳເຂົ້າ ຂອງ ສປປ ລາວ ແລະ ເອກະສານອື່ນທີ່ກ່ຽວຂ້ອງຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ໄປຍັງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ຂັ້ນສູນກາງ ຫລື ດ່ານກວດກາສັດຕະວະແພດຂາເຂົ້າ ແລະ ເສຍຄ່າບໍລິການດ້ານເຕັກນິກ ແລະ ຄ່າທຳນຽມ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

ໃນການຂົນສົ່ງຜ່ານດິນແດນ ສປປ ລາວ ໄປຍັງປະເທດທີ່ສາມນັ້ນ ໃຫ້ພະນັກງານສັດຕະວະແພດ ຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ຂັ້ນສູນກາງ ແລະ ພະນັກງານສັດຕະວະແພດ ປະຈຳດ່ານ ກວດກາຄວາມຖືກຕ້ອງຂອງເອກະສານ ແລະ ກວດກາສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ແລ້ວພິຈາລະນາ ຄົ້ນຄວ້າອະນຸຍາດ ຫລື ບໍ່ອະນຸຍາດໃຫ້ຂົນສົ່ງຜ່ານ ຕາມແຕ່ລະກໍລະນີ ດັ່ງນີ້:

1. ກໍລະນີເຫັນວ່າ ການຂົນສົ່ງສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ບໍ່ມີຄວາມສ່ຽງຕໍ່ການນຳເອົາເຊື້ອພະຍາດ ເຂົ້າມາແຜ່ລາມ ຫລື ລະບາດ ໃນ ສປປ ລາວ ຫລື ບໍ່ມີການປົນເປື້ອນທາດເບື່ອ ແລະ ຜູ້ຮ້ອງຂໍ ກໍໄດ້ປະຕິບັດຕາມລະບຽບການ ແລະ ເງື່ອນໄຂຕາມທີ່ໄດ້ກຳນົດໄວ້ ໃນດຳລັດສະບັບນີ້ແລ້ວ ໃຫ້ພະນັກງານສັດຕະວະແພດ ຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ຂັ້ນສູນກາງ ຫລື ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານກວດກາສັດຕະວະແພດຂາອອກ ອອກໃບອະນຸຍາດຂົນສົ່ງຜ່ານ ແລະ ອອກອະນຸຍາດ ໃຫ້ຜູ້ຮ້ອງຂໍຂົນສົ່ງຜ່ານດິນແດນ ສປປ ລາວ ແລະ ປະຕິບັດຕາມຄຳແນະນຳຂອງພະນັກງານສັດຕະວະແພດ ກ່ຽວກັບການຂົນສົ່ງຜ່ານ ຢ່າງເຄັ່ງຄັດ;
2. ກໍລະນີເຫັນວ່າ ມີພະຍາດສັດຕາມທີ່ໄດ້ກຳນົດໃນບັນຊີພະຍາດສັດ ຂອງ ສປປ ລາວ, ປະເທດທີ່ຂົນສົ່ງຜ່ານແລະ ປະເທດຕົ້ນທາງ ຊຶ່ງເຊື້ອພະຍາດອາດຕິດແປດໃສ່ສັດ ແລະ ພະຍາດດັ່ງກ່າວ ກໍບໍ່ເຄີຍເກີດ ຢູ່ ສປປ ລາວ ໃຫ້ພະນັກງານສັດຕະວະແພດ ຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ແລະ ເຈົ້າໜ້າທີ່ສັດຕະວະແພດ ປະຈຳດ່ານພິຈາລະນາຄົ້ນຄວ້າອະນຸຍາດ ຫລື ປະຕິເສດການຂໍອະນຸຍາດຂົນສົ່ງຜ່ານ ດັ່ງກ່າວ.
3. ຫົວໜ້າດ່ານກວດກາສັດຕະວະແພດຂາອອກ ອາດດັດແກ້, ໂຈະ ຫລື ຍົກເລີກການອອກໃບອະນຸຍາດຂົນສົ່ງຜ່ານ ໃນກໍລະນີທີ່ເຫັນວ່າ ການຂົນສົ່ງຜ່ານນັ້ນ ມີຄວາມສ່ຽງຕໍ່ການນຳເອົາເຊື້ອພະຍາດ ເຂົ້າມາແຜ່ລາມ ຫລື ລະບາດ ຫລື ມີຄວາມສ່ຽງຕໍ່ການປົນເປື້ອນທາດເບື່ອໃນ ສປປ ລາວ ແລ້ວໃຫ້ລາຍງານເປັນລາຍລັກອັກສອນ ຕໍ່ອົງການຄຸ້ມຄອງວຽກງານການ

ລ້ຽງສັດ ແລະ ການສັດຕະວະແພດ ຂັ້ນສູນກາງ ໂດຍມີການຊີ້ແຈງເຫດຜົນຂອງການດັດແກ້, ໂຈະ ຫລື ຍົກເລີກດັ່ງກ່າວ.

### ມາດຕາ 37. ຂັ້ນຕອນ ແລະ ລະບຽບການອະນຸຍາດຂົນສົ່ງຜ່ານ

ບຸກຄົນ ຫລື ນິຕິບຸກຄົນ ທີ່ມີຈຸດປະສົງ ຂົນສົ່ງຜ່ານ ສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ຕ້ອງຍື່ນໃບອະນຸຍາດຂົນສົ່ງຜ່ານ, ໃບຢັ້ງຢືນການກວດກາດ້ານສັດຕະວະແພດ ຫລື ໃບຢັ້ງຢືນສຸຂານາໄມ ພ້ອມດ້ວຍເອກະສານອື່ນທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ຢູ່ດ່ານກວດກາດ້ານສັດຕະວະແພດຂາເຂົ້າ.

ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານຂາເຂົ້າ ຕ້ອງກວດກາຄວາມຖືກຕ້ອງ ຂອງເອກະສານ ແລະ ກວດກາ ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ຍົກເວັ້ນກໍລະນີທີ່ພາຫານະຂົນສົ່ງ ຫລື ວັດຖຸຫຸ້ມຫໍ່ ຫາກຖືກປິດດ້ວຍການໜີບກົ່ວ ຫລື ມີການປ້ອງກັນການໄຂວັດຖຸຫຸ້ມຫໍ່ ດ້ວຍວິທີການອື່ນ ແມ່ນໃຫ້ກວດກາຄວາມຖືກຕ້ອງຂອງເອກະສານເທົ່ານັ້ນ.

ຜູ້ຂົນສົ່ງ, ເຈົ້າຂອງ ຫລື ບຸກຄົນທີ່ຮັບຜິດຊອບການຂົນສົ່ງຜ່ານ ຕ້ອງຍື່ນເອກະສານທີ່ກ່ຽວຂ້ອງຕໍ່ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານຂາອອກ ເພື່ອກວດກາ ແລະ ຢັ້ງຢືນການຂົນສົ່ງຜ່ານດິນແດນ ສປປ ລາວ ແລະ ໃຫ້ຫົວໜ້າດ່ານສັດຕະວະແພດຂາອອກ ສົ່ງສຳເນົາເອກະສານກ່ຽວກັບການຂົນສົ່ງຜ່ານ ແລະ ການຢັ້ງຢືນການຂົນສົ່ງຜ່ານ ຈຳນວນ ໜຶ່ງສະບັບ ໄປໃຫ້ດ່ານກວດກາດ້ານສັດຕະວະແພດຂາເຂົ້າ ຕາມທີ່ໄດ້ກຳນົດໄວ້ໃນເອກະສານກ່ຽວກັບການຂົນສົ່ງຜ່ານນັ້ນ.

ໃນກໍລະນີເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານຂາເຂົ້າ ຫາກບໍ່ໄດ້ຮັບສຳເນົາເອກະສານດັ່ງກ່າວນັ້ນ ພາຍໃນກຳນົດເວລາ ເຈັດວັນ ໃຫ້ສົ່ງແຈ້ງການເປັນລາຍລັກອັກສອນ ໄປຍັງດ່ານກວດກາດ້ານສັດຕະວະແພດຂາອອກ ພ້ອມທັງລາຍງານເປັນລາຍລັກອັກສອນ ຕໍ່ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ຂັ້ນສູນກາງ ໂດຍຜ່ານອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ແຂວງ, ນະຄອນ.

ຜູ້ຂົນສົ່ງ, ເຈົ້າຂອງ ຫລື ບຸກຄົນທີ່ຮັບຜິດຊອບການຂົນສົ່ງຜ່ານ ຕ້ອງປະຕິບັດຕາມລະບຽບການ ແລະ ເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ພ້ອມທັງປະຕິບັດຕາມຄຳແນະນຳຂອງເຈົ້າໜ້າທີ່ສັດຕະວະແພດ ແລະ ຂົນສົ່ງຜ່ານ ຕາມເສັ້ນທາງທີ່ໄດ້ກຳນົດໄວ້ ໃນໃບອະນຸຍາດຂົນສົ່ງຜ່ານ ຢ່າງເຄັ່ງຄັດ.

ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ເປັນຜູ້ກຳນົດລະບຽບການສະເພາະ ສຳລັບການຂົນສົ່ງຜ່ານທາງບົກ, ທາງນ້ຳ ແລະ ທາງອາກາດ.

## ໝວດທີ 6
## ລະບຽບການຂົນສົ່ງ ແລະ ລະບຽບການເຄື່ອນຍ້າຍ

### ມາດຕາ 38. ລະບຽບການຂົນສົ່ງ

ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ຂັ້ນສູນກາງ ກຳນົດລະບຽບສະເພາະກ່ຽວກັບການຂົນສົ່ງ ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ

ຊຶ່ງຜູ້ຂົນສົ່ງ, ເຈົ້າຂອງ ຫລື ບຸກຄົນທີ່ຮັບຜິດຊອບໃນການຂົນສົ່ງສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ຕ້ອງປະຕິບັດຕາມລະບຽບການ ດັ່ງກ່າວ.

**ມາດຕາ 39. ລະບຽບການເຄື່ອນຍ້າຍ**

ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ຂັ້ນສູນກາງ ກຳນົດລະບຽບສະເພາະກ່ຽວກັບການເຄື່ອນຍ້າຍ ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ຊຶ່ງຜູ້ເຄື່ອນຍ້າຍ, ເຈົ້າຂອງ ຫລື ບຸກຄົນທີ່ຮັບຜິດຊອບການເຄື່ອນຍ້າຍ ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ຕ້ອງປະຕິບັດຕາມລະບຽບການດັ່ງກ່າວ.

## ໝວດທີ 7
## ການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ

**ມາດຕາ 40. ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ**

ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ປະກອບດ້ວຍ:

1. ກະຊວງກະສິກຳ ແລະ ປ່າໄມ້ ໂດຍແມ່ນ ກົມລ້ຽງສັດ ແລະ ການປະມົງ ເປັນເສນາທິການ;
2. ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນ ໂດຍແມ່ນ ຂະແໜງລ້ຽງສັດ ແລະ ການປະມົງ ເປັນເສນາທິການ;
3. ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ ໂດຍແມ່ນ ໜ່ວຍງານລ້ຽງສັດ ແລະ ການປະມົງ ເປັນເສນາທິການ;
4. ດ່ານກວດກາສັດຕະວະແພດສາກົນ;
5. ໜ່ວຍລ້ຽງສັດ ແລະ ສັດຕະວະແພດບ້ານ.

**ມາດຕາ 41. ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ປ່າໄມ້**

ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ປ່າໄມ້ ໃນການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ມີດັ່ງນີ້:

1. ໃຫ້ຄຳແນະນຳທາງດ້ານນະໂຍບາຍ ແລະ ວິຊາການໃຫ້ແກ່ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ຂັ້ນຕ່າງໆ;
2. ຮັບຜິດຊອບໃນການພັດທະນາມາດຕະຖານທາງດ້ານວິຊາການ, ນະໂຍບາຍ ຫລື ການຕັດສິນບັນຫາໃດໜຶ່ງທາງດ້ານວິຊາການ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້;
3. ສ້າງເງື່ອນໄຂອຳນວຍຄວາມສະດວກໃນການນຳເຂົ້າ ແລະ ສົ່ງອອກ ສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ;
4. ວິເຄາະ, ປະເມີນ ແລະ ຕີລາຄາຄວາມສ່ຽງ, ມາດຕະຖານດ້ານສຸຂານາໄມ ຂອງຄູ່ຮ່ວມມືທາງດ້ານການຄ້າ;
5. ຄຸ້ມຄອງດ່ານກວດກາສັດຕະວະແພດສາກົນ, ອອກໃບອະນຸຍາດນຳເຂົ້າ, ສົ່ງອອກ ແລະ ຂົນສົ່ງຜ່ານ ສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ;

6. ອອກໃບຢັ້ງຢືນສຸຂະພາບສັດ ສໍາລັບການສົ່ງອອກສັດ ແລະ ອະນຸຍາດໃຫ້ນໍາເຂົ້າສັດເພື່ອເປັນແນວພັນ;
7. ອອກໃບຢັ້ງຢືນສຸຂະພາບສັດທົ່ວໄປ ຫລື ໃບຢັ້ງຢືນສຸຂານາໄມສັດ ເພື່ອການສົ່ງອອກ;
8. ຊີ້ນໍາ, ກວດກາ ການເຄື່ອນໄຫວຂອງພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ, ນະຄອນ, ຂັ້ນເມືອງ, ເທດສະບານ ແລະ ດ່ານກວດກາດ້ານສັດຕະວະແພດສາກົນ ລວມທັງປະສານສົມທົບ ກັບພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານຄຸ້ມຄອງການລ້ຽງສັດ ແລະ ການສັດຕະວະແພດ;
9. ສ້າງຕັ້ງດ່ານສັດຕະວະແພດທ້ອງຖິ່ນ ຫລື ດ່ານກວດກາສັດຕະວະແພດຊົ່ວຄາວ ຢູ່ສະຖານທີ່ໃດໜຶ່ງ ໃນກໍລະນີຈໍາເປັນ ເປັນຕົ້ນ: ເກີດການລະບາດຂອງພະຍາດລະບາດສັດໃດໜຶ່ງ ໂດຍມີການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ;
10. ແຕ່ງຕັ້ງ ຫລື ປົດຕໍາແໜ່ງ ພະນັກງານສັດຕະວະແພດ ແລະ ເຈົ້າໜ້າທີ່ສັດຕະວະແພດປະຈໍາດ່ານສັດຕະວະແພດສາກົນ ໂດຍມີການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ;
11. ພັດທະນາລະບົບການຄຸ້ມຄອງການກວດກາສຸຂະພາບສັດ, ການກວດກາດ້ານສັດຕະວະແພດ ແລະ ການກວດກາຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ຕາມຂັ້ນຕອນການເຄື່ອນຍ້າຍ, ການຂົນສົ່ງ, ການນໍາເຂົ້າ, ການສົ່ງອອກ ແລະ ການຂົນສົ່ງຜ່ານ ຕາມທີ່ໄດ້ກໍານົດໄວ້ໃນດໍາລັດສະບັບນີ້;
12. ພັດທະນາລະບົບການຂຶ້ນທະບຽນພົມສັດ, ການສືບຄົ້ນຫາທີ່ມາ ຫລື ປະຫວັດຂອງສັດ ແລະ ພັດທະນາລະບົບການບັນທຶກຂໍ້ມູນຂ່າວສານກ່ຽວກັບສັດ;
13. ປະສານສົມທົບ ກັບອົງການຈັດຕັ້ງທຸກຂັ້ນ ໃນການເຝົ້າລະວັງ ແລະ ການກວດກາການເຄື່ອນຍ້າຍ ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ;
14. ອອກຄໍາແນະນໍາກ່ຽວກັບການກັກກັນສັດໃນສະຖານີກັກກັນສັດ ແລະ ສິ່ງອໍານວຍຄວາມສະດວກອື່ນ;
15. ກວດກາ, ປັບປຸງມາດຕະການ ກ່ຽວກັບການຄຸ້ມຄອງການເຄື່ອນຍ້າຍ ເພື່ອຮັບປະກັນການຄວບຄຸມພະຍາດສັດ;
16. ພັດທະນາ ແລະ ເຜີຍແຜ່ນິຕິກໍາ, ລະບຽບການກ່ຽວກັບການຄຸ້ມຄອງການເຄື່ອນຍ້າຍສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ;
17. ພົວພັນ ຮ່ວມມື ແລະ ປະສານສົມທົບກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເພື່ອໃຫ້ການບໍລິການດ້ານສຸຂະພາບສັດ;
18. ປະສານສົມທົບ ກັບອົງການຈັດຕັ້ງອື່ນຂັ້ນສູນກາງ ທີ່ມີໜ້າທີ່ຮັບຜິດຊອບ ກ່ຽວກັບຄວາມປອດໄພຂອງອາຫານ, ສຸຂະພາບຄົນ ແລະ ສັດ, ວຽກງານພາສີ, ການຄ້າ ແລະ ສິ່ງແວດລ້ອມ;
19. ປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ໃນການຝຶກອົບຮົມໃຫ້ແກ່ພະນັກງານ ແລະ ເຈົ້າໜ້າທີ່ສັດຕະວະແພດ;
20. ຈັດງານກິດຈະກໍາສັງຄົມຕ່າງໆ ເພື່ອເສີມສ້າງຄວາມຮັບຮູ້ ແລະ ປູກຈິດສໍານຶກກ່ຽວກັບວຽກງານ ລະບຽບການ ກ່ຽວກັບການຄຸ້ມຄອງການເຄື່ອນຍ້າຍສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ;

21.ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ຂອງ ສປປ ລາວ.

**ມາດຕາ 42. ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນ**

ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດມາດຕະຖານ ແລະ ຜັນຂະຫຍາຍນະໂຍບາຍ ທາງດ້ານວິຊາການ ກ່ຽວກັບການຄຸ້ມຄອງການເຄື່ອນຍ້າຍ ສັດ, ຜະລິດຕພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ກະຊວງກະສິກຳ ແລະ ປ່າໄມ້ ວາງອອກ ;
2. ອອກໃບອະນຸຍາດ ແລະ ອະນຸຍາດໃຫ້ເຄື່ອນຍ້າຍສັດ ລະຫວ່າງເມືອງ, ເທດສະບານ ພາຍໃນແຂວງ, ນະຄອນ ຫລື ລະຫວ່າງແຂວງ, ນະຄອນ;
3. ຊ່ວຍຕິດຕາມການຂົນສົ່ງຜ່ານ ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ຕາມຂອບເຂດສິດຂອງຕົນ ແລະ ຕາມການມອບໝາຍ ຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ຂັ້ນສູນກາງ;
4. ຈັດຕັ້ງປະຕິບັດລະບົບການຂຶ້ນທະບຽນພິມສັດ, ການສືບຄົ້ນຫາທີ່ມາ ຫລື ປະຫວັດຂອງສັດ ແລະ ນຳໃຊ້ລະບົບການບັນທຶກຂໍ້ມູນຂ່າວສານກ່ຽວກັບສັດ;
5. ສະໜອງຂໍ້ມູນ ແລະ ລາຍງານຕໍ່ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ຂັ້ນສູນກາງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້;
6. ເຝົ້າລະວັງ, ຕິດຕາມ ແລະ ລາຍງານກ່ຽວກັບພະຍາດລະບາດສັດ ຕາມແຜນການເຝົ້າລະວັງ ຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ຂັ້ນສູນກາງ;
7. ຊີ້ນຳ, ຕິດຕາມ ແລະ ປະສານສົມທົບ ກັບອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ເມືອງ, ເທດສະບານ ກ່ຽວກັບວຽກງານການຄຸ້ມຄອງການເຄື່ອນຍ້າຍສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
8. ສ້າງລະບຽບການກ່ຽວກັບການຄຸ້ມຄອງການເຄື່ອນຍ້າຍສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ແຂວງ, ນະຄອນ ພ້ອມທັງເຜີຍແຜ່ ແລະ ໃຫ້ຄຳແນະນຳໃນການຈັດຕັ້ງປະຕິບັດລະບຽບການດັ່ງກ່າວ;
9. ປະສານສົມທົບກັບອົງການຈັດຕັ້ງອື່ນຂອງແຂວງ, ນະຄອນ ທີ່ມີໜ້າທີ່ຮັບຜິດຊອບ ກ່ຽວກັບຄວາມປອດໄພ ຂອງອາຫານ, ສຸຂະພາບຄົນ ແລະ ສັດ, ວຽກງານພາສີ, ການຄ້າ ແລະ ສິ່ງແວດລ້ອມ;
10. ປະສານສົມທົບ ກັບພາກສ່ວນອື່ນຂັ້ນສູນກາງ ໃນການຝຶກອົບຮົມໃຫ້ແກ່ພະນັກງານ ແລະ ເຈົ້າໜ້າທີ່ສັດຕະວະແພດ;
11. ຈັດງານກິດຈະກຳສັງຄົມຕ່າງໆ ເພື່ອເສີມສ້າງຄວາມຮັບຮູ້ ແລະ ປູກຈິດສຳນຶກກ່ຽວກັບວຽກງານ ລະບຽບການກ່ຽວກັບການຄຸ້ມຄອງການເຄື່ອນຍ້າຍສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ;
12. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ຂອງ ສປປ ລາວ.

**ມາດຕາ 43. ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ**

ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດມາດຕະຖານ ແລະ ຜັນຂະຫຍາຍນະໂຍບາຍ ທາງດ້ານວິຊາການ ກ່ຽວກັບການຄຸ້ມຄອງການເຄື່ອນຍ້າຍ ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ຕາມການຊີ້ນຳຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ແຂວງ, ນະຄອນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ຈັດຕັ້ງປະຕິບັດລະບົບການຂຶ້ນທະບຽນພິມສັດ, ການສືບຄົ້ນຫາທີ່ມາ ຫລື ປະຫວັດຂອງສັດ ແລະ ນຳໃຊ້ລະບົບການບັນທຶກຂໍ້ມູນຂ່າວສານກ່ຽວກັບສັດ ຕາມຂອບເຂດຄວາມຮັບຜິດຊອບ ຂອງຕົນ;
3. ຄຸ້ມຄອງ, ກວດກາການເຄື່ອນຍ້າຍ, ການຂົນສົ່ງ ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ຕາມທີ່ກຳນົດໄວ້ໃນດຳລັດສະບັບນີ້ ແລະ ສະໜອງຂໍ້ມູນໃຫ້ແກ່ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນ;
4. ຊີ້ນຳ, ຕິດຕາມ ການຈັດຕັ້ງປະຕິບັດກິດຈະກຳການເຄື່ອນຍ້າຍ, ການຂົນສົ່ງ ສັດ, ຜະລິດຕະ ພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ຂອງໜ່ວຍລ້ຽງສັດ ແລະ ສັດຕະວະແພດ ຂັ້ນບ້ານ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ປະສານສົມທົບ ກັບອົງການຈັດຕັ້ງອື່ນ ຂັ້ນເມືອງ, ເທດສະບານ ທີ່ມີໜ້າທີ່ຮັບຜິດຊອບກ່ຽວກັບຄວາມປອດໄພ ຂອງອາຫານ, ສຸຂະພາບຄົນ ແລະ ສັດ, ວຽກງານພາສີ, ການຄ້າ ແລະ ສິ່ງແວດລ້ອມ;
6. ຕິດຕໍ່ປະສານງານ ກັບອົງການຄຸ້ມຄອງຂັ້ນເມືອງ ກ່ຽວກັບຄວາມປອດໄພຂອງອາຫານ, ພາສີ, ການຄ້າ, ສິ່ງແວດລ້ອມ ແລະ ສຸຂະພາບຄົນ;
7. ຈັດງານກິດຈະກຳສັງຄົມຕ່າງໆ ເພື່ອເສີມສ້າງຄວາມຮັບຮູ້ ແລະ ປູກຈິດສຳນຶກ ກ່ຽວກັບວຽກງານລະບຽບການກ່ຽວກັບການຄຸ້ມຄອງການເຄື່ອນຍ້າຍ ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ;
8. ເຜີຍແຜ່ລະບຽບການກ່ຽວກັບການຄຸ້ມຄອງການເຄື່ອນຍ້າຍ, ການຂົນສົ່ງ ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ຕາມການມອບໝາຍຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ຂອງ ສປປ ລາວ.

**ມາດຕາ 44. ສິດ ແລະ ໜ້າທີ່ ຂອງດ່ານກວດກາສັດຕະວະແພດສາກົນ**

ດ່ານກວດກາສັດຕະວະແພດສາກົນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາດ້ານສັດຕະວະແພດ ສັດ, ຜະລິດຕະພັນສັດ ແລະ/ຫລື ຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ຜ່ານດ່ານ;
2. ຮັບຄຳຮ້ອງຂໍອະນຸຍາດ ແລະ ອະນຸຍາດໃຫ້ນຳເຂົ້າ, ສົ່ງອອກ ຫລື ຂົນສົ່ງຜ່ານ ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ຕາມຂອບເຂດສິດ ຕາມທີ່ໄດ້ກຳນົດ ໄວ້ໃນລະບຽບການສະເພາະຕ່າງຫາກ;

3. ເຜີຍແຜ່ລະບຽບການໃນການຄຸ້ມຄອງການເຄື່ອນຍ້າຍ ແລະ ການຂົນສົ່ງ ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ພ້ອມທັງໃຫ້ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດລະບຽບການດັ່ງກ່າວ;
4. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ຂອງ ສປປ ລາວ.

**ມາດຕາ 45. ສິດ ແລະ ໜ້າທີ່ ຂອງໜ່ວຍລ້ຽງສັດ ແລະ ສັດຕະວະແພດບ້ານ**

ໜ່ວຍລ້ຽງສັດ ແລະ ສັດຕະວະແພດບ້ານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ລາຍງານ ແລະ ສະໜອງຂໍ້ມູນ ກ່ຽວກັບການເຄື່ອນຍ້າຍ ແລະ ການຂົນສົ່ງ ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ໄປຍັງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ ຢ່າງເປັນປົກກະຕິ;
2. ເຝົ້າລະວັງ ແລະ ລາຍງານກ່ຽວກັບສະພາບການລະບາດ ຂອງພະຍາດສັດ ໄປຍັງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ;
3. ເຜີຍແຜ່ລະບຽບການ ກ່ຽວກັບການຄຸ້ມຄອງການເຄື່ອນຍ້າຍ ແລະ ການຂົນສົ່ງ ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ເພື່ອປູກຈິດສຳນຶກ ໃຫ້ແກ່ຜູ້ຂົນສົ່ງ, ຜູ້ເຄື່ອນຍ້າຍ, ເຈົ້າຂອງ ແລະ ບຸກຄົນທີ່ຮັບຜິດຊອບ ການເຄື່ອນຍ້າຍ ສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ;
4. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ຂອງ ສປປ ລາວ.

## ໝວດທີ 8
## ການກວດກາດ້ານສັດຕະວະແພດ ແລະ ການຮ້ອງທຸກ

**ມາດຕາ 46. ການກວດກາດ້ານສັດຕະວະແພດ**

ພະນັກງານ ແລະ ເຈົ້າໜ້າທີ່ສັດຕະວະແພດ ຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ແຕ່ລະຂັ້ນ ຕ້ອງປະຕິບັດຕາມລະບຽບການ, ປື້ມຄູ່ມື, ມາດຕະຖານການປະຕິບັດງານ ແລະ ການກວດກາດ້ານສັດຕະວະແພດ ດັ່ງນີ້:

1. ກວດກາເອກະສານ;
2. ກວດກາດ້ານສຸຂະພາບ ແລະ ອາການຂອງສັດ;
3. ກວດກາດ້ານເຄມີ ຫລື ຊີວະວິທະຍາ;
4. ກວດກາດ້ວຍວິທີການອື່ນ ຕາມເຕັກນິກທາງສັດຕະວະແພດ.

ໃນເວລາກວດກາດ້ານສັດຕະວະແພດ ໃຫ້ພະນັກງານ ແລະ ເຈົ້າໜ້າທີ່ສັດຕະວະແພດ ແນະນຳ ກ່ຽວກັບຈຸດປະສົງ ແລະ ຄວາມຈຳເປັນໃນການກວດກາ ໂດຍອີງໃສ່ມາດຕະການໃນການກັນ ແລະ ສະກັດກັ້ນພະຍາດສັດ ພ້ອມທັງສະແດງບັດປະຈຳຕົວຂອງຕົນທຸກຄັ້ງ.

**ມາດຕາ 47. ການລາຍງານ**

ເມື່ອສຳເລັດການກວດກາດ້ານສັດຕະວະແພດທຸກຄັ້ງ ໃຫ້ພະນັກງານ ແລະ ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ກະກຽມບົດລາຍງານຜົນຂອງການກວດກາດ້ານສັດຕະວະແພດ

ເປັນລາຍລັກອັກສອນ ພ້ອມດ້ວຍຂໍ້ມູນທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ, ປື້ມຄູ່ມື, ມາດຕະຖານການປະຕິບັດງານ ແລະ ການກວດກາດ້ານສັດຕະວະແພດ ພ້ອມດ້ວຍເຫດຜົນໃນການກວດກາ, ມາດຕະການທີ່ນຳໃຊ້ ແລະ ເຫດຜົນໃນການນຳໃຊ້ມາດຕະການດັ່ງກ່າວ.

ບົດລາຍງານດັ່ງກ່າວ ຕ້ອງເຮັດເປັນ ສາມ ສະບັບ, ໃນນັ້ນ ໜຶ່ງສະບັບ ໃຫ້ພະນັກງານສັດຕະວະແພດ ເກັບຮັກສາໄວ້, ໜຶ່ງສະບັບ ໃຫ້ເຈົ້າໜ້າທີ່ສັດຕະວະແພດ ແລະ ອີກໜຶ່ງສະບັບສົ່ງໃຫ້ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ ທີ່ຕົນສັງກັດຢູ່.

### ມາດຕາ 48. ການຮ້ອງທຸກ

ບຸກຄົນ ຫລື ນິຕິບຸກຄົນໃດ ທີ່ບໍ່ພໍໃຈຕໍ່ຜົນຂອງການກວດກາດ້ານສັດຕະວະແພດ, ການກະທຳ ຫລື ຜົນຂອງການພິຈາລະນາຄົ້ນຄ້ວາ ກ່ຽວກັບການກວດກາດ້ານສັດຕະວະແພດ ຫລື ການຂໍອະນຸຍາດນຳເຂົ້າ ຫລື ຂົນສົ່ງຜ່ານ ສາມາດຍື່ນຄຳຮ້ອງທຸກຂອງຕົນ ໄປຍັງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດຂັ້ນຖັດໄປ ຕາມທີ່ໄດ້ກຳນົດໄວ້ ໃນລະບຽບກົດໝາຍ ທີ່ກ່ຽວຂ້ອງ ຂອງ ສປປ ລາວ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

### ມາດຕາ 49. ການຈັດຕັ້ງປະຕິບັດ

ມອບໃຫ້ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດທຸກຂັ້ນ ປະສານສົມທົບ ກັບບັນດາກະຊວງ, ອົງການທຽບເທົ່າກະຊວງ, ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

### ມາດຕາ 50. ຜົນສັກສິດ

ດຳລັດສະບັບນີ້ ປ່ຽນແທນດຳລັດ ສະບັບເລກທີ 207/ນຍ, ລົງວັນທີ 27 ກໍລະກົດ 2007 ວ່າດ້ວຍການກວດກາສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ນຳເຂົ້າ ແລະ ຂົນສົ່ງຜ່ານ ສປປ ລາວ.

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫລັງ ໜຶ່ງຮ້ອຍແປດສິບວັນ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະບານ

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ